ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ

ເລກທີ 1160/ກສ

ນະຄອນຫຼວງວຽງຈັນ, ວັນທີ 20 MAR 2026

# ຂໍ້ຕົກລົງ
# ວ່າດ້ວຍການຕ້ານ ການຟອກເງິນ, ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍແລະ ການແຜ່ ຜາຍອາວຸດທຳລາຍລ້າງຜານ ສຳລັບຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ

- ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ກົດໝາຍວ່າດ້ວຍການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 64/ສພຊ, ລົງວັນທີ 1 ກໍລະກົດ 2024;
- ອີງຕາມ ດຳລັດວ່າດ້ວຍການຕ້ານການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ສະບັບເລກທີ 554/ລບ, ລົງວັນທີ 04 ກັນຍາ 2025;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 534/ນຍ, ລົງວັນທີ 14 ສິງຫາ 2025;
- ອີງຕາມ ໜັງສືສະເໜີຂອງກົມຄຸ້ມຄອງ ແລະ ພັດທະນາທີ່ດິນ ສະບັບເລກທີ 2073/ກຄພດ, ລົງວັນທີ 17 ມີນາ 2026;
- ອີງຕາມ ໜັງສືສະເໜີຂອງຫ້ອງການ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 1554/ຫກ, ລົງວັນທີ 18 ມີນາ 2026.

## ລັດຖະມົນຕີ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດລະບຽບການ, ວິທີການ, ມາດຕະການຄຸ້ມຄອງ ແລະ ຕິດຕາມ ກວດກາ ການດຳເນີນທຸລະກິດກ່ຽວກັບທີ່ດິນ ໃຫ້ເປັນເອກະພາບໃນ ຂອບເຂດທົ່ວປະເທດ ເພື່ອຮັບປະກັນປະຕິບັດສິດ ແລະ ພັນທະ ສຳລັບຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ດ້ວຍການປະເມີນ ແລະ ການບໍລິຫານຄວາມສ່ຽງ, ການຄຸ້ມຄອງພາຍໃນ, ການຮູ້ຈັກລູກຄ້າ ແລະ ການເພີ່ມທະວີເອົາໃຈໃສ່ລູກຄ້າ ແນໃສ່ປະກອບສ່ວນໃຫ້ວຽກງານການຕ້ານ ການຟອກເງິນ, ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ແລະ ການແຜ່ຜາຍອາວຸດທຳລາຍລ້າງຜານ ສຳລັບຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ຢ່າງປະສິດທິພາບ, ປະສິດທິຜົນ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

**ມາດຕາ 2 ການຕ້ານ ການຟອກເງິນ, ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ແລະ ການແຜ່ຜາຍອາວຸດທຳລາຍລ້າງຜານ ສຳລັບຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ**

ການຕ້ານ ການຟອກເງິນ, ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ແລະ ການແຜ່ຜາຍອາວຸດທຳລາຍລ້າງຜານ ສຳລັບຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ແມ່ນ ການປະຕິບັດ ສິດ ແລະ ພັນທະ ຂອງຜູ້ດຳເນີນທຸລະກິດດັ່ງກ່າວ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງ ເປັນຕົ້ນ ວຽກງານການປະເມີນ ແລະ ການບໍລິຫານຄວາມສ່ຽງ, ການຄຸ້ມຄອງ ພາຍໃນ, ການຊອກຮູ້ລູກຄ້າ ແລະ ມາດຕະການເພີ່ມທະວີເອົາໃຈໃສ່ລູກຄ້າ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ທຸລະກິດກ່ຽວກັບທີ່ດິນ** ໝາຍເຖິງ ການເຄື່ອນໄຫວ ແລະ ການປ່ຽນແປງ ສິດນຳໃຊ້ທີ່ດິນ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເປັນຕົ້ນ ການຊື້ ຂາຍ ສິດນຳໃຊທີ່ດິນ, ແລກປ່ຽນສິດນຳໃຊ້ທີ່ດິນ, ເອົາສິດນຳໃຊ້ທີ່ດິນເຂົ້າເປັນຮຸ້ນ, ເປັນຫຼັກຊັບຄ້ຳປະກັນ;

2. **ການແຜ່ຜາຍອາວຸດ ທຳລາຍລ້າງຜານ** ໝາຍເຖິງ ການຂະຫຍາຍຕົວ, ແຜ່ກະຈາຍ ແລະ ເຮັດໃຫ້ອາວຸດທຳລາຍລ້າງຜານ ທີ່ຜິດກົດໝາຍສາກົນ ຖືກສົ່ງໄປຍັງປະເທດ ຫຼື ກຸ່ມຄົນທີ່ບໍ່ຄວນໄດ້ຮັບ ໂດຍບໍ່ຖືກກວດສອບ ຫຼື ຄວບຄຸມ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ ຂອງ ສປປ ລາວ ແລະ ສົນທິສັນຍາທີ່ກ່ຽວຂ້ອງ ຂອງສະພາຄວາມໝັ້ນຄົງ ຂອງອົງການສະຫະປະຊາຊາດ ທີ່ ສປປ ລາວ ເປັນພາຄີ;

3. **ລູກຄ້າ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ລວມທັງ ຜູ້ທີ່ມີການຕົກລົງກັນທາງດ້ານກົດໝາຍ ທີ່ໃຊ້ບໍລິການຂອງຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ;

4. **ການລະບຸຕົວຕົນ** ໝາຍເຖິງ ການເອົາຂໍ້ມູນຂອງລູກຄ້າ, ຜູ້ຮັບຜົນປະໂຫຍດ, ບຸກຄົນທີ່ເປັນຜູ້ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ, ຜູ້ທີ່ຖືກມອບໝາຍໃຫ້ມາເຮັດທຸລະກຳແທນ ເປັນຕົ້ນ ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ, ວັນເດືອນປີເກີດ, ສະຖານທີ່ເກີດ, ທີ່ຢູ່ປັດຈຸບັນ, ຂໍ້ມູນໃນການຕິດຕໍ່ພົວພັນ ແລະ ຂໍ້ມູນອື່ນໆ ທີ່ຈຳເປັນ;

5. **ການຢັ້ງຢືນ** ໝາຍເຖິງ ການລະບຸຕົນຂອງລູກຄ້າ ລວມທັງຜູ້ຮັບຜົນປະໂຫຍດ ແລະ ຜູ້ທີ່ຖືກມອບໝາຍໃຫ້ມາເຮັດທຸລະກຳແທນ ໂດຍການໃຫ້ລູກຄ້າ ສະແດງເອກະສານ ຫຼື ຫຼັກຖານທີ່ຖືກຕ້ອງຕາມກົດໝາຍ ຫຼື ຈາກແຫຼ່ງຂໍ້ມູນທີ່ເຊື່ອຖືໄດ້ ເພື່ອຢັ້ງຢືນຕົວຕົນ ພ້ອມທັງສາມາດກວດສອບໄດ້ ກ່ອນໃຫ້ບໍລິການ ຫຼື ສ້າງສາຍພົວພັນທຸລະກິດ ທຸກຄັ້ງ;

6. **ແຫຼ່ງຂໍ້ມູນ ຫຼື ເອກະສານ ທີ່ສາມາດເຊື່ອຖືໄດ້** ໝາຍເຖິງ ເອກະສານທີ່ສາມາດຢັ້ງຢືນ ແຫຼ່ງຂໍ້ມູນ, ຖານຂໍ້ມູນ ຫຼື ເອກະສານ ທີ່ເຊື່ອຖືໄດ້ ເປັນຕົ້ນ ບັດປະຈຳຕົວ ຫຼື ໃບຢັ້ງຢືນທີ່ຢູ່ (ຕົ້ນສະບັບ), ເອກະສານຢັ້ງຢືນຈາກຫ້ອງການທະບຽນສານ ແລະ ຂໍ້ມູນ ຫຼື ເອກະສານອື່ນ ທີ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ສາມາດເຂົ້າເຖິງໄດ້ ຫຼື ມີການເຜີຍແຜ່ທົ່ວໄປ ຊຶ່ງເປັນຂໍ້ມູນທີ່ພາກສ່ວນກ່ຽວຂ້ອງຂອງລັດ ສ້າງຂຶ້ນເພື່ອຊ່ວຍໃນການຄົ້ນຫາ, ການກວດສອບ, ການຢັ້ງຢືນ ຫຼື ການຮັບຊາບ ຂໍ້ມູນກ່ຽວກັບເລື່ອງໃດໜຶ່ງ. ການສຳເນົາເອກະສານລະບຸຕົວຕົນຂອງລູກຄ້າ ຕ້ອງລົງວັນທີ, ລະບຸຊື່ ແລະ ຄຳເຫັນ ຂອງພະນັກງານຮັບຜິດຊອບ ທຸກຄັ້ງ;

7. **ຜູ້ທີ່ມີການຕົກລົງກັນທາງດ້ານກົດໝາຍ** ໝາຍເຖິງ ການຕົກລົງກັນທາງດ້ານກົດໝາຍລະຫວ່າງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເພື່ອບໍລິຫານຊັບສິນ (Trust) ຫຼື ຝ່າຍໃດໜຶ່ງ ກາຍເປັນຜູ້ຄຸ້ມຄອງ, ຄອບຄອງ, ນຳໃຊ້, ໄດ້ຮັບໝາກຜົນ, ດຳເນີນການຊື້-ຂາຍ ຫຼື ບໍລິຫານທຶນ ຫຼື ຊັບສິນໃດໜຶ່ງ ບໍ່ວ່າດ້ວຍວິທີການໃດກໍ່ຕາມທີ່ຖືກຕ້ອງຕາມກົດໝາຍ ເພື່ອໃຫ້ເກີດຜົນປະໂຫຍດ ຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ອີກຝ່າຍໜຶ່ງ ຫຼື ຜູ້ໄດ້ຮັບຜົນປະໂຫຍດທີ່ແທ້ຈິງຫຼື ໃນຮູບແບບອື່ນທີ່ມີລັກສະນະຄ້າຍຄືກັນ;

8. **ບໍລິສັດ ບໍລິຫານຊັບສິນ (Trust Service Provider) ຫຼື ຜູ້ບໍລິຫານຊັບສິນ (Trustee)** ໝາຍເຖິງ ຜູ້ທີ່ຖືກມອບໝາຍ ໃຫ້ມີສິດບໍລິຫານເງິນ, ຫຼັກຊັບ, ຊັບສິນ, ບັນຊີທະນາຄານ, ບັນຊີຫຼັກຊັບ ແລະ ເປັນຜູ້ໄດ້

ຮັບມອບໝາຍ ໃນການເປັນຜູ້ຖືຮຸ້ນຂອງບຸກຄົນອື່ນ ໂດຍບໍລິສັດ ບໍລິຫານກອງທຶນເພື່ອການລົງທຶນ, ກອງທຶນເພື່ອການລົງທຶນ, ວິສາຫະກິດກົດໝາຍ, ບໍລິສັດກວດສອບບັນຊີ ແລະ ຫົວໜ່ວຍທຸລະກິດ ທີ່ໄດ້ຮັບອະນຸຍາດເຄື່ອນໄຫວໃນຮູບແບບບໍລິສັດບໍລິຫານຊັບສິນ;

9. **ຜູ້ໄດ້ຮັບຜົນປະໂຫຍດ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບຜົນປະໂຫຍດຈາກການເຄື່ອນໄຫວທຸລະກຳ ຫຼື ການສ້າງສາຍພົວພັນທາງດ້ານທຸລະກິດ ຕາມທີ່ໄດ້ລະບຸໃນເອກະສານ ຫຼື ສັນຍາໃດໜຶ່ງ;

10. **ຜູ້ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ** ໝາຍເຖິງ ບຸກຄົນ ຫຼື ກຸ່ມຄົນ ທີ່ມີກຳມະສິດແທ້ຈິງ ຈາກການເຄື່ອນໄຫວທຸລະກິດ, ກິດຈະການ ຫຼື ທຸລະກຳໃດໜຶ່ງ, ມີສິດ ຫຼື ສາມາດ ຄວບຄຸມລູກຄ້າ ຂອງຕົນ ຫຼື ບຸກຄົນ ທີ່ດຳເນີນທຸລະກຳແທນ ລວມທັງຜູ້ທີ່ມີສິດຄວບຄຸມ ນິຕິບຸກຄົນ ຫຼືການດຳເນີນການທາງດ້ານກົດໝາຍ. ສຳລັບຜູ້ຮັບຜົນປະໂຫຍດທີ່ແທ້ຈິງ ໃນນິຕິບຸກຄົນປະກອບດ້ວຍ ຜູ້ທີ່ໄດ້ຮັບຜົນປະໂຫຍດ ທາງກົງ ແລະ ທາງອ້ອມ, ເປັນຂາຮຸ້ນ ຫຼື ຜູ້ຖືຮຸ້ນ ຫຼື ມີສິດລົງຄະແນນສຽງ ນັບຕັ້ງແຕ່ຊາວສ່ວນຮ້ອຍ ຂຶ້ນໄປ;

11. **ບຸກຄົນ ທີ່ມີສະຖານະພາບທາງການເມືອງ** ໝາຍເຖິງ ນັກການເມືອງຕ່າງປະເທດ, ພະນັກງານຂອງລັດ, ພະນັກງານອົງການຈັດຕັ້ງສາກົນ, ສະມາຊິກໃນຄອບຄົວ ແລະ ບຸກຄົນທີ່ມີສາຍພົວພັນໃກ້ຊິດ ຂອງບຸກຄົນທີ່ມີສະຖານະພາບທາງການເມືອງ;

12. **ນັກການເມືອງຕ່າງປະເທດ** ໝາຍເຖິງ ບຸກຄົນທີ່ໄດ້ຮັບມອບໝາຍ ຫຼື ເຄີຍໄດ້ຮັບມອບໝາຍ ໃຫ້ດຳລົງຕຳແໜ່ງລະດັບສູງຢູ່ຕ່າງປະເທດ ເຊັ່ນ ປະທານປະເທດ, ຫົວໜ້າຄະນະລັດຖະບານ, ເຈົ້າໜ້າທີ່ລັດລະດັບສູງ, ນັກການເມືອງທີ່ສຳຄັນ ຫຼື ອາວຸໂສ, ນາຍທະຫານ ແລະ ຕຳຫຼວດ ລະດັບສູງ, ພະນັກງານໄອຍະການ ແລະ ຜູ້ພິພາກສາລະດັບສູງ ແລະ ຜູ້ບໍລິຫານລະດັບສູງຂອງລັດວິສາຫະກິດ ລວມທັງສະມາຊິກຄອບຄົວ ຫຼື ບຸກຄົນທີ່ມີສາຍພົວພັນໃກ້ຊິດກັບບຸກຄົນດັ່ງກ່າວ;

13. **ພະນັກງານຂອງລັດ** ໝາຍເຖິງ ພະນັກງານ, ທະຫານ, ຕຳຫຼວດ ຜູ້ທີ່ດຳລົງ ຫຼື ເຄີຍດຳລົງຕຳແໜ່ງສຳຄັນ ແລະ ມີບົດບາດ ໃນ ສປປ ລາວ, ສະມາຊິກສະພາບໍລິຫານ, ຄະນະຜູ້ບໍລິຫານຂອງວິສາຫະກິດລັດລົງທຶນລວມທັງບຸກຄົນທີ່ໄດ້ຮັບມອບໝາຍ ຫຼື ເຄີຍໄດ້ຮັບມອບໝາຍ ໃຫ້ດຳລົງຕຳແໜ່ງລະດັບສູງ ເປັນຕົ້ນ ເຈົ້າໜ້າທີ່ລັດລະດັບສູງ ຫຼື ອາວຸໂສ, ພະນັກງານຂອງອົງການຕຸລາການລະດັບສູງ ແລະ ຜູ້ບໍລິຫານລະດັບສູງຂອງລັດວິສາຫະກິດ;

14. **ພະນັກງານອົງການຈັດຕັ້ງສາກົນ** ໝາຍເຖິງ ບຸກຄົນ ທີ່ໄດ້ຮັບມອບໝາຍ ຫຼື ເຄີຍໄດ້ຮັບມອບໝາຍໃຫ້ດຳລົງຕຳແໜ່ງລະດັບສູງໃນອົງການຈັດຕັ້ງສາກົນ ເປັນຕົ້ນ ຜູ້ບໍລິຫານລະດັບສູງ, ກຳມະການບໍລິຫານ ຫຼື ຜູ້ທີ່ມີຕຳແໜ່ງທຽບເທົ່າ;

15. **ສະມາຊິກໃນຄອບຄົວ ຂອງບຸກຄົນທີ່ມີສະຖານະພາບທາງການເມືອງ** ໝາຍເຖິງ ພໍ່, ແມ່, ລູກ, ອ້າຍ, ເອື້ອຍ, ນ້ອງ, ຄູ່ສົມລົດ, ພໍ່ແມ່ຂອງຜົວ ຫຼື ເມຍ;

16. **ບຸກຄົນ ທີ່ມີສາຍພົວພັນໃກ້ຊິດ ຂອງບຸກຄົນທີ່ມີສະຖານະພາບທາງການເມືອງ** ໝາຍເຖິງ 1) ບຸກຄົນທີ່ເພິ່ງພາກັນທາງການເງິນ ເຊັ່ນ ຄົນຂັບລົດ, ຕຳຫຼວດໃກ້ຊິດ, ຜູ້ຮັກສາຄວາມປອດໄພ, ເລຂານຸການ ຂອງບຸກຄົນທີ່ມີສະຖານະພາບທາງການເມືອງ; 2) ພະນັກງານ ທີ່ໃກ້ຊິດກັບບຸກຄົນທີ່ມີສະຖານະພາບທາງການເມືອງທີ່ຢູ່ອົງການຈັດຕັ້ງດຽວກັນ; 3) ບຸກຄົນທີ່ເຮັດວຽກໃກ້ຊິດກັບບຸກຄົນທີ່ມີສະຖານະພາບທາງການເມືອງ ແລະ 4) ໝູ່ເພື່ອນສະນິດ;

17. **ການກວດກາພາຍໃນທີ່ເປັນເອກະລາດ** ໝາຍເຖິງ ການກວດກາພາຍໃນສະເພາະ ກ່ຽວກັບການຈັດຕັ້ງປະຕິບັດວຽກງານການຕ້ານ ການຟອກເງິນ, ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ການແຜ່ຂະຫຍາຍອາວຸດທຳລາຍລ້າງຜານ ພ້ອມທັງລາຍງານໂດຍກົງກັບຜູ້ອຳນວຍການໃຫຍ່ ຫຼື ສະພາບໍລິຫານ;

18. **ສາຂາ** ໝາຍເຖິງ ພາຍໃນກຸ່ມບໍລິສັດ, ສາຂາ ແລະ ບໍລິສັດລູກຂອງຕົນ ທີ່ນອນໃນຫົວໜ່ວຍຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ; ໔

19. **ບໍລິສັດໃນກຸ່ມ** ໝາຍເຖິງ ພາຍໃນກຸ່ມບໍລິສັດ, ສາຂາ ແລະ ບໍລິສັດລູກຂອງຕົນ ທີ່ນອນໃນຫົວໜ່ວຍຜູ້ດໍາເນີນທຸລະກິດກ່ຽວກັບທີ່ດິນ;

20. **ມາດຕະການທີ່ສົມເຫດສົມຜົນ** ໝາຍເຖິງ ມາດຕະການທີ່ແທດເໝາະ ຊຶ່ງສອດຄ່ອງກັບຄວາມສ່ຽງດ້ານການຟອກເງິນ, ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ການແຜ່ຜາຍອາວຸດທໍາລາຍລ້າງຜານ.

**ມາດຕາ 4 ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບຜູ້ດໍາເນີນທຸລະກິດກ່ຽວກັບທີ່ດິນ ທີ່ໄດ້ຮັບໃບອະນຸຍາດ ຢ່າງຖືກຕ້ອງຕາມກົດໝາຍ ທີ່ເຄື່ອນໄຫວ ໃນດິນແດນຢູ່ ສປປ ລາວ.

## ໝວດທີ 2
## ການປະເມີນ ແລະ ບໍລິຫານຄວາມສ່ຽງ

**ມາດຕາ 5 ການປະເມີນຄວາມສ່ຽງທຸລະກິດກ່ຽວກັບທີ່ດິນ ວຽກງານການຕ້ານ ການຟອກເງິນ, ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ແລະ ການແຜ່ຜາຍອາວຸດທໍາລາຍລ້າງຜານ**

ການປະເມີນຄວາມສ່ຽງ ທຸລະກິດກ່ຽວກັບທີ່ດິນ ວຽກງານການຕ້ານ ການຟອກເງິນ, ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ການແຜ່ຜາຍອາວຸດທໍາລາຍລ້າງຜານ ປະກອບ ມີດັ່ງນີ້:

1. ການປະເມີນຄວາມສ່ຽງລະດັບຊາດ ດ້ານການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
2. ການປະເມີນຄວາມສ່ຽງຂອງຜູ້ດໍາເນີນທຸລະກິດກ່ຽວກັບທີ່ດິນ.

**ມາດຕາ 6 ການປະເມີນຄວາມສ່ຽງລະດັບຊາດ ດ້ານການຕ້ານ ການຟອກເງິນ ແລະ ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ**

ການປະເມີນຄວາມສ່ຽງ ລະດັບຊາດ ດ້ານການຕ້ານ ການຟອກເງິນ ແລະ ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ແມ່ນ ຄວາມຮັບຜິດຊອບຂອງກົມຄຸ້ມຄອງ ແລະ ພັດທະນາທີ່ດິນ ສົມທົບກັບສໍານັກງານຂໍ້ມູນຕ້ານການຟອກເງິນ ດໍາເນີນການເກັບກໍາຂໍ້ມູນ ກ່ຽວກັບການຈັດຕັ້ງປະຕິບັດຂອງບັນດາທຸລະກິດກ່ຽວກັບທີ່ດິນໃນຂອບເຂດທົ່ວປະເທດ ເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຊຶ່ງເປັນສ່ວນໜຶ່ງທີ່ໄດ້ກໍານົດໄວ້ໃນບົດປະເມີນຄວາມສ່ຽງລະດັບຊາດ ຕາມເງື່ອນໄຂຂອງອົງການຕ້ານການຟອກເງິນສາກົນ. ຜົນການປະເມີນ ຕ້ອງໄດ້ລາຍງານໃຫ້ແກ່ສໍານັກງານຂໍ້ມູນຕ້ານການຟອກເງິນ ຕາມການເຫັນດີຂອງຄະນະນໍາກະຊວງກະສິກໍາ ແລະ ສິ່ງແວດລ້ອມ ເພື່ອປະກອບເຂົ້າບົດລາຍງານຄວາມສ່ຽງລະດັບຊາດ ຂອງ ສປປ ລາວ.

ພາຍຫຼັງສໍາເລັດການປະເມີນຜົນຄວາມສ່ຽງທຸລະກິດກ່ຽວກັບທີ່ດິນ ແລ້ວໃຫ້ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ດໍາເນີນການເຜີຍແຜ່ຜົນການປະເມີນຄວາມສ່ຽງລະດັບຊາດທີ່ຕິດພັນກັບຂະແໜງການກະສິກໍາ ແລະ ສິ່ງແວດລ້ອມ ແລະ ຜູ້ດໍາເນີນທຸລະກິດກ່ຽວກັບທີ່ດິນ.

ຜົນຂອງການປະເມີນຄວາມສ່ຽງລະດັບຊາດ ກ່ຽວກັບວຽກງານການຕ້ານ ການຟອກເງິນ ແລະ ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ຈະໄດ້ນໍາມາຈັດຕັ້ງປະຕິບັດການປະເມີນຄວາມສ່ຽງ ຕາມຫຼັກການບໍລິຫານຄວາມສ່ຽງ ຂອງບັນດາຜູ້ທີ່ດໍາເນີນທຸລະກິດກ່ຽວກັບທີ່ດິນ ເພື່ອໃຫ້ຮູ້ວ່າທຸລະກິດໃດທີ່ມີຄວາມສ່ຽງສູງ, ຄວາມສ່ຽງກາງ ແລະ ຄວາມສ່ຽງຕໍ່າ ຕາມຫຼັກການບໍລິຫານຄວາມສ່ຽງ.

ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ ກະຊວງກະສິກໍາ ແລະ ສິ່ງແວດລ້ອມ ແລະ ພະແນກກະສິກໍາ ແລະ ສິ່ງແວດລ້ອມ ຂັ້ນແຂວງ ດໍາເນີນການປະເມີນຄວາມສ່ຽງທຸລະກິດກ່ຽວກັບທີ່ດິນ ທີ່ຕົນເອງໄດ້ອອກໃບອະນຸຍາດດໍາເນີນທຸລະກິດກ່ຽວກັບທີ່ດິນ ຕາມທີ່ໄດ້ກໍານົດໄວ້ໃນຂໍ້ຕົກລົງວ່າດ້ວຍທຸລະກິດກ່ຽວກັບທີ່ດິນ.

**ມາດຕາ 7 ການປະເມີນຄວາມສ່ຽງ ຂອງຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ**

ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ຕ້ອງດຳເນີນການປະເມີນຄວາມສ່ຽງ ຕາມຫຼັກການປະເມີນຄວາມສ່ຽງດ້ານການຟອກເງິນ, ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ແລະ ການແຜ່ຜາຍອາວຸດທຳລາຍລ້າງຜານ ດ້ວຍການກຳນົດ, ຕີລາຄາ, ຕິດຕາມ ແລະ ຫຼຸດຜ່ອນຄວາມສ່ຽງນັ້ນ ເປັນຕົ້ນ ລູກຄ້າ; ຜະລິດຕະພັນ ແລະ ການບໍລິ ການ ທີ່ມີຢູ່ ແລະ ສ້າງຂຶ້ນໃໝ່; ຊ່ອງທາງການໃຫ້ບໍລິການ, ວິທີການ ແລະ ເຕັກໂນໂລຊີແບບໃໝ່ ໃນການດຳເນີນທຸລະກິດ; ລວມທັງພື້ນທີ່ ຫຼື ປະເທດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ. ພາຍຫຼັງດຳເນີນການປະເມີນຄວາມສ່ຽງຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ຕ້ອງໄດ້ດຳເນີນການທົບທວນ ແລະ ປັບປຸງ ນະໂຍບາຍ, ຫຼັກການ, ຂັ້ນຕອນ ຫຼື ລະບຽບການພາຍໃນຂອງຕົນ ໃນແຕ່ລະໄລຍະ.

ໃນການປະເມີນຄວາມສ່ຽງ ຂອງຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ໃຫ້ປະຕິບັດ ດັ່ງນີ້:

1. ປະເມີນກ່ຽວກັບນະໂຍບາຍ, ກົດລະບຽບ, ການຄວບຄຸມ ແລະ ຂັ້ນຕອນ ການຈັດຕັ້ງປະຕິບັດວຽກງານການຕ້ານ, ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ແລະ ການແຜ່ຜາຍອາວຸດທຳລາຍລ້າງຜານ ທີ່ຖືກຮັບຮອງຈາກເຈົ້າຂອງຜູ້ດຳເນີນທຸະກິດກ່ຽວກັບທີ່ດິນ ຫຼື ຜູ້ທີ່ຖືກໄດ້ຮັບມອບໝາຍຈາກເຈົ້າຂອງທຸລະກິດ ໃນການຄຸ້ມຄອງບໍລິຫານທຸລະກິດດັ່ງກ່າວ ເພື່ອອຳນວຍຄວາມສະດວກໃນການປະເມີນຄວາມສ່ຽງ ແລະ ຫຼຸດຜ່ອນຄວາມສ່ຽງ. ຜົນຂອງການປະເມີນ ຕ້ອງລາຍງານໃຫ້ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ທີ່ອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ຕາມກົດໝາຍ ແລະ ລະບຽບການ.

2. ພິຈາລະນາປັດໄຈທີ່ກ່ຽວກັບ (1) ລູກຄ້າ, (2) ຜະລິດຕະພັນ ແລະ ການບໍລິການ ທີ່ມີຢູ່ ແລະ ສ້າງຂຶ້ນໃໝ່, (3) ຊ່ອງທາງການໃຫ້ບໍລິການ, ວິທີການ ແລະ ເຕັກໂນໂລຊີແບບໃໝ່ ໃນການດຳເນີນທຸລະກິດ, (4) ພື້ນທີ່ ຫຼື ປະເທດ ກ່ອນການກຳນົດລະດັບຄວາມສ່ຽງ ລວມທັງກຳນົດຮູບແບບໃນການການບໍລິຫານຄວາມສ່ຽງ ແລະ (5) ນຳເອົາຜົນການປະເມີນຄວາມສ່ຽງລະດັບຊາດ ມາປະເມີນຜົນຄວາມສ່ຽງທຸລະກິດຂອງຕົນ;

3. ທົບທວນ ແລະ ປັບປຸງ ຕາມຜົນຂອງການປະເມີນຄວາມສ່ຽງ ກ່ຽວກັບການຕ້ານ ການຟອກເງິນ, ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ແລະ ການແຜ່ຜາຍອາວຸດທຳລາຍລ້າງຜານ ເປັນແຕ່ລະໄລຍະ ຕາມລະດັບຄວາມສ່ຽງ;

4. ລາຍງານຜົນການປະເມີນຄວາມສ່ຽງ ໃຫ້ແກ່ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ແລະ ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເປັນແຕ່ລະໄລຍະ.

**ມາດຕາ 8 ການບໍລິຫານຄວາມສ່ຽງຂອງຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ**

ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ຕ້ອງມີການດຳເນີນການບໍລິຫານຄວາມສ່ຽງ ດ້ວຍການຈັດຊັ້ນລະດັບຄວາມສ່ຽງຂອງລູກຄ້າ ໂດຍການພິຈາລະນາຈາກຜົນການປະເມີນຄວາມສ່ຽງ ຂອງລູກຄ້າແຕ່ລະລະດັບ ເພື່ອກຳນົດຄວາມເຂັ້ມງວດ ໃນການດຳເນີນມາດຕະການເພີ່ມທະວີການເອົາໃຈໃສ່ ໃນການເກັບກຳຂໍ້ມູນລູກຄ້າຂອງຕົນ ພ້ອມທັງມີມາດຕະການທີ່ເໝາະສົມ ໃນການບໍລິຫານຄວາມສ່ຽງ ກ່ຽວກັບການຕ້ານ ການຟອກເງິນ, ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ແລະ ການແຜ່ຜາຍອາວຸດທຳລາຍລ້າງຜານ.

ຖ້າຫາກ ເຫັນວ່າລູກຄ້າມີຄວາມສ່ຽງສູງ ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ຕ້ອງດຳເນີນມາດຕະການແບບລົງເລິກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 21 ຂອງຂໍ້ຕົກລົງສະບັບນີ້ ໂດຍການເພີ່ມຄວາມຖີ່ໃນການຕິດຕາມກວດກາ ສາຍພົວພັນທຸລະກິດ ລວມທັງການເຄື່ອນໄຫວທຸລະກຳ ເພື່ອຊອກຫາທຸລະກຳ ທີ່ຜິດປົກກະຕິ.

ຖ້າຫາກເຫັນວ່າລູກຄ້າມີຄວາມສ່ຽງຕ່ຳ ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ຕ້ອງດຳເນີນມາດຕະການແບບງ່າຍດາຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 22 ຂອງຂໍ້ຕົກລົງສະບັບນີ້.

ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ຕ້ອງມີມາດຕະການທີ່ເໝາະສົມ ເພື່ອການບໍລິຫານຄວາມສ່ຽງດ້ານການຟອກເງິນ, ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ແລະ ການແຜ່ຜາຍອາວຸດທຳລາຍລ້າງຜານ ກ່ອນການໃຫ້ບໍລິການ, ການດຳເນີນທຸລະກຳ ແລະ ການສ້າງສາຍພົວພັນທຸລະກິດ ກັບລູກຄ້າຂອງຕົນ ທັງເກົ່າ ແລະ ໃໝ່ ພ້ອມທັງມີການທົບທວນຄືນເປັນແຕ່ລະໄລຍະ. ໔

**ມາດຕາ 9 ຕົວຊີ້ບອກຄວາມສ່ຽງຕໍ່າ**

ຕົວຊີ້ບອກທີ່ມີຄວາມສ່ຽງຕໍ່າ ມີດັ່ງນີ້:

1. ຕົວຊີ້ບອກຄວາມສ່ຽງຕໍ່າ ທີ່ເກີດຈາກລູກຄ້າ ຕ້ອງໄດ້ພິຈາລະນາ ດັ່ງນີ້:

1.1. ພະນັກງານລັດ ຫຼື ເອກະຊົນ ທີ່ສາມາດຮັບຮູ້ລາຍໄດ້ ແລະ ແຫຼ່ງທີ່ມາຂອງເງິນ ໂດຍມີຂໍ້ມູນຫຼັກຖານຢັ້ງຢືນ;

1.2. ປະຊາຊົນ ຜູ້ທີ່ມີລາຍໄດ້ຕໍ່າ ຊຶ່ງໄດ້ຖືກຍົກເວັ້ນຈາກການຫັກອາກອນລາຍໄດ້;

1.3. ລັກສະນະອື່ນ ທີ່ຜູ້ດໍາເນີນທຸລະກິດກ່ຽວກັບທີ່ດິນ ຫຼື ອົງການຈັດຕັ້ງທີ່ກ່ຽວຂ້ອງ ເປັນຜູ້ກໍານົດເພີ່ມເຕີມ.

2. ຕົວຊີ້ບອກ ຄວາມສ່ຽງຕໍ່າ ທີ່ເກີດຈາກເຂດພື້ນທີ່ ຫຼື ປະເທດ ຕ້ອງພິຈາລະນາ ດັ່ງນີ້:

2.1. ເຂດພື້ນທີ່ ຫຼື ປະເທດ ທີ່ໄດ້ຮັບການປະເມີນແລ້ວວ່າມີການຈັດຕັ້ງປະຕິບັດວຽກງານການຕ້ານການຟອກເງິນ, ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ແລະ ການແຜ່ຜາຍອາວຸດທໍາລາຍລ້າງຜານ ທີ່ມີປະສິດທິພາບ ຈາກອົງການສາກົນທີ່ສາມາດເຊື່ອຖືໄດ້;

2.2. ເຂດພື້ນທີ່ ຫຼື ປະເທດ ທີ່ໄດ້ຮັບການປະເມີນ ຈາກອົງການສາກົນ ທີ່ສາມາດເຊື່ອຖືໄດ້ວ່າມີການສໍ້ລາດບັງຫຼວງ ຫຼື ອາຊະຍາກໍາອື່ນ ໃນລະດັບທີ່ຕໍ່າ.

**ມາດຕາ 10 ຕົວຊີ້ບອກຄວາມສ່ຽງສູງ**

ຕົວຊີ້ບອກຄວາມສ່ຽງສູງ ມີດັ່ງນີ້:

ກ. ຕົວຊີ້ບອກຄວາມສ່ຽງສູງ ທີ່ເກີດຈາກລູກຄ້າ ຕ້ອງພິຈາລະນາ ດັ່ງນີ້:

1. ກໍລະນີຜົນການຢັ້ງຢືນຕົວຕົນ ຫຼື ຜູ້ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ ຂອງລູກຄ້າ ມີລັກສະນະໃດໜຶ່ງ ດັ່ງນີ້:

1.1. ໂຄງສ້າງກ່ຽວກັບຜູ້ຖືຮຸ້ນມີຄວາມສະລັບຊັບຊ້ອນ ຫຼື ມີຄວາມຜິດປົກກະຕິ ເມື່ອທຽບໃສ່ການດໍາເນີນທຸລະກິດ ຕາມປົກກະຕິທົ່ວໄປ;

1.2. ເປັນບຸກຄົນ ທີ່ມີສະຖານະພາບທາງການເມືອງ;

1.3. ດໍາເນີນທຸລະກິດ ຫຼື ປະກອບອາຊີບ ທີ່ມີຄວາມສ່ຽງສູງ;

1.4. ການດໍາເນີນທຸລະກິດ ຫຼື ການເຄື່ອນໄຫວທຸລະກໍາ ຂອງລູກຄ້າທີ່ນໍາໃຊ້ເງິນສົດເປັນຫຼັກ ຊຶ່ງບໍ່ສອດຄ່ອງກັບທຸລະກິດຂອງລູກຄ້າ;

1.5. ບໍ່ແມ່ນສັນຊາດລາວ ຫຼື ບໍ່ໄດ້ອາໄສຢູ່ໃນ ສປປ ລາວ;

1.6. ເປັນລູກຄ້າ ທີ່ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ ຫຼື ຜູ້ທີ່ໄດ້ຮັບມອບໝາຍໃຫ້ຄຸ້ມຄອງ, ຄອບຄອງ, ນໍາໃຊ້, ໄດ້ຮັບໝາກຜົນ, ດໍາເນີນການຊື້ ຂາຍ ສິດນໍາໃຊ້ທີ່ດິນ ຫຼື ບໍລິຫານທຶນ ຫຼື ຊັບສິນໃດໜຶ່ງ ທີ່ຕິດພັນກັບທີ່ດິນ ທີ່ມີການຕົກລົງກັນຢ່າງຖືກຕ້ອງຕາມກົດໝາຍ;

1.7. ມີຂໍ້ມູນຫຼັກຖານ ທີ່ຢັ້ງຢືນວ່າເປັນລູກຄ້າ ທີ່ມີຄວາມສ່ຽງສູງ;

1.8. ລັກສະນະອື່ນ ທີ່ຜູ້ດໍາເນີນທຸລະກິດກ່ຽວກັບທີ່ດິນ ຫຼື ອົງການຈັດຕັ້ງທີ່ກ່ຽວຂ້ອງ ເປັນຜູ້ກໍານົດເພີ່ມເຕີມ.

2. ກໍລະນີ ຜົນການກວດສອບພົບວ່າການເຄື່ອນໄຫວທຸລະກໍາ ຫຼື ການສ້າງສາຍພົວພັນທຸລະກິດ ຂອງລູກຄ້າ ດໍາເນີນໄປໃນລັກສະນະທີ່ຜິດປົກກະຕິ.

ຂ. ຕົວຊີ້ບອກຄວາມສ່ຽງດ້ານຜະລິດຕະພັນ, ການດໍາເນີນທຸລະກໍາ ຫຼື ຊ່ອງທາງ ຫຼື ເຕັກໂນໂລຊີແບບໃໝ່ ໃນການໃຫ້ບໍລິການ ຕ້ອງພິຈາລະນາ ດັ່ງນີ້:

1. ການສ້າງສາຍພົວພັນດ້ານທຸລະກິດກ່ຽວກັບທີ່ດິນ ຫຼື ການດໍາເນີນທຸລະກໍາກັບນິຕິບຸກຄົນ ທີ່ບໍ່ມີໃບທະບຽນວິສາຫະກິດ ຫຼື ບໍ່ມີໃບອະນຸຍາດດໍາເນີນທຸລະກິດ;

2. ການສ້າງສາຍພົວພັນດ້ານທຸລະກິດກ່ຽວກັບທີ່ດິນ ຫຼື ການດໍາເນີນທຸລະກໍາ ທີ່ບໍ່ມີການເປີດເຜີຍຊື່ທີ່ແທ້ຈິງ;

3. ການສ້າງສາຍພົວພັນດ້ານທຸລະກິດກ່ຽວກັບທີ່ດິນ ຫຼື ການດຳເນີນທຸລະກຳ ໃນລັກສະນະແບບບໍ່ຊອງໜ້າ;

4. ລັກສະນະອື່ນ ທີ່ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ຫຼື ອົງການຈັດຕັ້ງທີ່ກ່ຽວຂ້ອງ ເປັນຜູ້ກຳນົດເພີ່ມເຕີມ.

ຄ. ຕົວຊີ້ບອກຄວາມສ່ຽງ ຊຶ່ງເກີດຈາກເຂດພື້ນທີ່ ຫຼື ປະເທດ ທີ່ມີຄວາມສ່ຽງສູງ ຕ້ອງພິຈາລະນາ ດັ່ງນີ້:

1. ປະເທດທີ່ຖືກກຳນົດໂດຍແຫຼ່ງທີ່ສາມາດເຊື່ອຖືໄດ້ ເປັນຕົ້ນ ບົດລາຍງານການປະເມີນຜົນ, ບົດລາຍງານການປະເມີນຜົນລະອຽດ ຫຼື ບົດລາຍງານຄວາມຄືບໜ້າ ກ່ຽວກັບຂໍ້ບົກຜ່ອງທາງດ້ານວຽກງານ ຕ້ານການຟອກເງິນ, ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ແລະ ການແຜ່ຂະຫຍາຍອາວຸດທຳລາຍລ້າງຜານ ດັ່ງນີ້:

1.1. ປະເທດທີ່ຖືກມາດຕະການລົງໂທດ ຫຼື ຂວ້ຳບາດ ຫຼື ມາດຕະການອື່ນໆ ທີ່ມີລັກສະນະຄ້າຍຄືກັນ ໂດຍອົງການຈັດຕັ້ງສາກົນ ເຊັ່ນ ອົງການສະຫະປະຊາຊາດ ແລະ ອື່ນໆ;

1.2. ປະເທດທີ່ຖືກກຳນົດໂດຍແຫຼ່ງທີ່ສາມາດເຊື່ອຖືໄດ້ ວ່າປະເທດດັ່ງກ່າວຕິດພັນກັບບັນຫາສໍ້ລາດບັງຫຼວງ ຫຼື ບັນຫາອາດສະຍາກຳອື່ນໆ;

1.3. ປະເທດ ຫຼື ພື້ນທີ່ ທີ່ຖືກກຳນົດໂດຍແຫຼ່ງທີ່ສາມາດເຊື່ອຖືໄດ້ ວ່າປະເທດດັ່ງກ່າວມີການສະໜອງທຶນ ຫຼື ສະໜັບສະໜູນ ໃຫ້ແກ່ການກໍ່ການຮ້າຍ ຫຼື ການແຜ່ຂະຫຍາຍອາວຸດທຳລາຍລ້າງຜານ ຫຼື ຖືກກຳນົດວ່າມີອົງກອນກໍ່ການຮ້າຍ ຫຼື ການແຜ່ຂະຫຍາຍອາວຸດທຳລາຍລ້າງຜານ ເຄື່ອນໄຫວຢູ່ພາຍໃນປະເທດ.

## ໝວດທີ 3
## ການຄຸ້ມຄອງພາຍໃນ ຂອງຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ

### ມາດຕາ 11 ການຄຸ້ມຄອງພາຍໃນ ຂອງຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ

ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ຕ້ອງດຳເນີນການຄວບຄຸມພາຍໃນ ດ້ວຍການສ້າງ, ປັບປຸງ ແລະ ຈັດຕັ້ງປະຕິບັດບັນດາແຜນງານ ຕ້ອງຄຳນຶງເຖິງຄວາມສ່ຽງທາງດ້ານການຟອກເງິນ, ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ແລະ ການແຜ່ຂະຫຍາຍອາວຸດທຳລາຍລ້າງຜານ ແລະ ຂະໜາດຂອງທຸລະກິດ ດັ່ງນີ້:

1. ນະໂຍບາຍ, ຂັ້ນຕອນການດຳເນີນງານ ແລະ ການຕິດຕາມ ກວດກາພາຍໃນ;

2. ຂັ້ນຕອນໃນການເລືອກເຟັ້ນ, ກັ່ນຕອງ ແລະ ຮັບເອົາພະນັກງານ ທີ່ໄດ້ມາດຕະຖານ (ກໍລະນີຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ມີຖານະເປັນນິຕິບຸກຄົນ);

3. ແຜນການຝຶກອົບຮົມໃຫ້ພະນັກງານ ແລະ ດຳເນີນການຝຶກອົບຮົມຢ່າງຕໍ່ເນື່ອງ;

4. ການກວດກາພາຍໃນທີ່ເປັນເອກະລາດ;

5. ການປະເມີນຜົນການຈັດຕັ້ງປະຕິບັດວຽກງານຕ້ານ ການຟອກເງິນ, ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ແລະ ການແຜ່ຂະຫຍາຍອາວຸດທຳລາຍລ້າງຜານ;

6. ລາຍງານຜົນການຈັດຕັ້ງປະຕິບັດແຜນງານ ເພື່ອຕ້ານການຟອກເງິນ, ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ແລະ ການແຜ່ຂະຫຍາຍອາວຸດທຳລາຍລ້າງຜານ ຕໍ່ອົງການຄຸ້ມຄອງຂອງຕົນ ໃນແຕ່ລະໄລຍະ.

ການກຳນົດນະໂຍບາຍ ຫຼື ລະບຽບການພາຍໃນ ຕາມທີ່ໄດ້ກຳໄວ້ໃນວັກທີ ໜຶ່ງ ມາດຕານີ້ ຕ້ອງລວມເອົາສາຂາ ແລະ ບໍລິສັດໃນກຸ່ມ ຂອງຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ.

ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ຕ້ອງແຕ່ງຕັ້ງພະນັກງານເກັບກຳຂໍ້ມູນ ແລະ ລາຍງານ ໃນລະດັບຜູ້ບໍລິຫານ ຫຼື ພະນັກງານອາວຸໂສທີ່ມີຄຸນວຸດທິ ຫຼື ຜູ້ມີປະສົບການ ກ່ຽວກັບວຽກງານຕ້ານ ການຟອກເງິນ, ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ແລະ ການແຜ່ຂະຫຍາຍອາວຸດທຳລາຍລ້າງຜານ ເພື່ອປະສານສົມທົບ ແລະ ລາຍງານວຽກງານດັ່ງກ່າວ ໃຫ້ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ ແລະ ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ຢ່າງເປັນປົກກະຕິ.

ໃນກໍລະນີຫາກມີການສົງໄສ ຫຼື ພົບເຫັນທຸລະກຳໃດໜຶ່ງ ກ່ຽວກັບການຟອກເງິນ, ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ແລະ ການແຜ່ຂະຫຍາຍອາວຸດທຳລາຍລ້າງຜານ ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ຕ້ອງລາຍງານ ໃຫ້ສຳນັກງານຂໍ້ມູນຕ້ານການຟອກເງິນ.

**ມາດຕາ 12 ການແບ່ງປັນຂໍ້ມູນ ພາຍໃນສາຂາ ແລະ ບໍລິສັດໃນກຸ່ມ ຂອງຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ**

ການແບ່ງປັນຂໍ້ມູນ ພາຍໃນສາຂາ ແລະ ບໍລິສັດໃນກຸ່ມ ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ສາມາດແລກປ່ຽນ ແລະ ແບ່ງປັນຂໍ້ມູນບົນພື້ນຖານການພິຈາລະນາຄວາມລະອຽດອ່ອນຂອງຂໍ້ມູນ, ຮັບປະກັນຄວາມປອດໄພ, ຮັກສາຄວາມລັບ ແລະ ຫຼີກລ້ຽງບໍ່ໃຫ້ລູກຄ້າຮູ້ຕົວ (tipping-off) ເປັນຕົ້ນ ຂໍ້ມູນທຸລະກຳ ທີ່ສົງໄສວ່າເປັນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ການໂອນເງິນທາງເອເລັກໂທຣນິກ, ຄວາມສ່ຽງ ແລະ ມາດຕະການເພີ່ມທະວີເອົາໃຈໃສ່ລູກຄ້າ ພາຍໃນສາຂາ ແລະ ບໍລິສັດໃນກຸ່ມຂອງຕົນ ທີ່ເຄື່ອນໄຫວທຸລະກິດໃນ ສປປ ລາວ.

## ໝວດທີ 4
## ການຊອກຮູ້ລູກຄ້າ

**ມາດຕາ 13 ການຊອກຮູ້ລູກຄ້າ**

ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ຕ້ອງຊອກຮູ້ລູກຄ້າ ດ້ວຍການໃຫ້ລູກຄ້າ ແຈ້ງເອກະສານຢັ້ງຢືນຕົນ ເຊັ່ນ ບັດປະຈຳຕົວ, ປຶ້ມສຳມະໂນຄົວ, ໜັງສືຜ່ານແດນ, ໃບທະບຽນວິສາຫະກິດ ຫຼື ເອກະສານທາງລັດຖະການອື່ນ ທີ່ສາມາດຢັ້ງຢືນກ່ຽວກັບລູກຄ້າ ຫຼື ຜູ້ທີ່ມາເຮັດທຸລະກຳແທນລູກຄ້າ ແລ້ວບັນທຶກຢ່າງຖືກຕ້ອງ, ສຳເນົາ ແລະ ເກັບຮັກສາໄວ້ເປັນຢ່າງດີ.

**ມາດຕາ 14 ການເກັບກຳຂໍ້ມູນລູກຄ້າ**

ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ຕ້ອງດຳເນີນການເກັບກຳຂໍ້ມູນລູກຄ້າ ທີ່ມີຄວາມສ່ຽງຟອກເງິນ, ສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ແລະ ການແຜ່ຜາຍອາວຸດທຳລາຍລ້າງຜານ ໃນລະດັບສູງ, ກາງ ແລະ ຕໍ່າ ດ້ວຍການເກັບກຳຂໍ້ມູນ ແລະ ເອກະສານ ຫຼື ຫຼັກຖານ ການຢັ້ງຢືນຕົວຕົນຂອງລູກຄ້າ, ຜູ້ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ ແລະ ຜູ້ທີ່ຖືກມອບໝາຍໃຫ້ມາເຮັດທຸລະກຳແທນ ສຳລັບຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ໃນເວລາໃຫ້ບໍລິການ ຫຼື ກ່ອນສ້າງສາຍພົວພັນທຸລະກິດໃດໜຶ່ງກັບລູກຄ້າ ຕ້ອງໄດ້ກວດສອບ, ພິສູດບັນດາຂໍ້ມູນ ແລະ ເອກະສານ ຫຼື ຫຼັກຖານ ໃຫ້ຮູ້ໄດ້ເຖິງຂໍ້ມູນແທ້ຈິງກ່ຽວກັບລູກຄ້າ ແລະ ທຸລະກຳຂອງລູກຄ້າ ໃຫ້ມີຄວາມຄົບຖ້ວນ ແລະ ຖືກຕ້ອງ.

**ມາດຕາ 15 ການເກັບກຳຂໍ້ມູນ ລູກຄ້າທີ່ເປັນບຸກຄົນ**

ການເກັບກຳຂໍ້ມູນ ລູກຄ້າທີ່ເປັນບຸກຄົນ ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ຕ້ອງເກັບກຳຂໍ້ມູນ ແລະ ເອກະສານ ຫຼື ຫຼັກຖານ ທີ່ຖືກຕ້ອງຕາມກົດໝາຍ ດັ່ງນີ້:

1. ກໍລະນີລູກຄ້າເປັນບຸກຄົນ ທີ່ຖືສັນຊາດລາວ ໃຫ້ປະຕິບັດ ດັ່ງນີ້:

1.1. ຊື່ ແລະ ນາມສະກຸນ;

1.2. ວັນ, ເດືອນ, ປີເກີດ;

1.3. ບັດປະຈຳຕົວ ຫຼື ສຳມະໂນຄົວ ຫຼື ໜັງສືຜ່ານແດນ ທີ່ຍັງບໍ່ທັນໝົດອາຍຸການນຳໃຊ້;

1.4. ອາຍຸ ແລະ ອາຊີບ;

1.5. ທີ່ຢູ່ຕາມທະບຽນບ້ານ ຫຼື ສຳມະໂນຄົວ ແລະ ທີ່ຢູ່ປັດຈຸບັນ;

1.6. ຊື່ ແລະ ສະຖານທີ່ ທີ່ເຮັດວຽກ;

1.7. ຂໍ້ມູນໃນການຕິດຕໍ່ພົວພັນ ເຊັ່ນ ໂທລະສັບ ຫຼື ສະຖານທີ່ພັກເຊົາ ແລະ ທີ່ຢູ່ທາງເອເລັກໂຕຣນິກ;

1.8. ລາຍມື ພ້ອມດ້ວຍລາຍເຊັນ;

1.9. ໜັງສື ຫຼື ເອກະສານ ທີ່ມີລາຍມື ຫຼື ລາຍເຊັນ ຂອງຜູ້ມອບອຳນາດ ແລະ ຜູ້ທີ່ຖືກມອບໝາຍໃຫ້ມາເຮັດທຸລະກຳ ຫຼື ສ້າງສາຍພົວພັນທຸລະກິດແທນ;

1.10. ຂໍ້ມູນອື່ນທີ່ຈຳເປັນ ຫຼື ຕາມການກຳນົດເພີ່ມເຕີມ ຂອງສຳນັກງານຂໍ້ມູນຕ້ານການຟອກເງິນ;

2. ກໍລະນີລູກຄ້າ ເປັນຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ, ຄົນຕ່າງປະເທດທີ່ເປັນເຊື້ອຊາດລາວ ໃຫ້ປະຕິບັດ ດັ່ງນີ້:

2.1. ຊື່ ແລະ ນາມສະກຸນ;

2.2. ວັນ, ເດືອນ, ປີເກີດ;

2.3. ສັນຊາດ, ອາຍຸ ແລະ ອາຊີບ;

2.4. ໜັງສືຜ່ານແດນ ທີ່ລັດຖະບານເຈົ້າຂອງສັນຊາດອອກໃຫ້ ທີ່ຍັງບໍ່ທັນໝົດອາຍຸການນຳໃຊ້;

2.5. ບັດຕ່າງດ້າວ (ກໍລະນີບຸກຄົນ ທີ່ມາຕັ້ງຖິ່ນຖານ ແລະ ອາໄສ ຢູ່ ສປປ ລາວ ຍາວນານ);

2.6. ທີ່ຢູ່ຕາມ ທະບຽນບ້ານ ຫຼື ສຳມະໂນຄົວ ແລະ ທີ່ຢູ່ປັດຈຸບັນ ໃນ ສປປ ລາວ ແລະ ທີ່ຢູ່ປະເທດຂອງຜູ້ກ່ຽວ;

2.7. ຊື່ ແລະ ສະຖານທີ່ ທີ່ເຮັດວຽກ ທັງຢູ່ປະເທດຂອງຜູ້ກ່ຽວ ແລະ ຢູ່ໃນ ສປປ ລາວ;

2.8. ຂໍ້ມູນໃນການຕິດຕໍ່ພົວພັນ ເຊັ່ນ ໂທລະສັບ ຫຼື ສະຖານທີ່ພັກເຊົາ ແລະ ທີ່ຢູ່ທາງເອເລັກໂຕຣນິກ;

2.9. ລາຍມື ພ້ອມດ້ວຍລາຍເຊັນ;

2.10. ໜັງສື ຫຼື ເອກະສານ ທີ່ມີລາຍມື ຫຼື ລາຍເຊັນ ຂອງຜູ້ມອບອຳນາດ ແລະ ຜູ້ທີ່ຖືກມອບໝາຍໃຫ້ມາເຮັດທຸລະກຳ ຫຼື ສ້າງສາຍພົວພັນທຸລະກິດ ແທນ;

2.11. ຂໍ້ມູນອື່ນ ທີ່ຈຳເປັນ ຫຼື ຕາມການກຳນົດເພີ່ມເຕີມ ຂອງຜູ້ຄຸ້ມຄອງ.

**ມາດຕາ 16 ການເກັບກຳຂໍ້ມູນ ລູກຄ້າ ທີ່ເປັນນິຕິບຸກຄົນ ຫຼື ການຈັດຕັ້ງ**

ການເກັບກຳຂໍ້ມູນ ລູກຄ້າ ທີ່ເປັນນິຕິບຸກຄົນ ຫຼື ການຈັດຕັ້ງ ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ຕ້ອງເກັບກຳຂໍ້ມູນ ແລະ ເອກະສານ ຫຼື ຫຼັກຖານ ທີ່ຖືກຕ້ອງຕາມກົດໝາຍ ດັ່ງນີ້:

1. ຊື່ນິຕິບຸກຄົນ ແລະ ປະເພດທຸລະກິດ;
2. ສະຖານທີ່ຕັ້ງຂອງສຳນັກງານ;
3. ຂໍ້ມູນໃນການຕິດຕໍ່ພົວພັນ ເຊັ່ນ ໂທລະສັບ, ໂທລະສານ ແລະ ທີ່ຢູ່ທາງເອເລັກໂຕຣນິກ;
4. ເລກທີ ແລະ ໃບທະບຽນວິສາຫະກິດ ທີ່ຍັງບໍ່ທັນໝົດອາຍຸການນຳໃຊ້;
5. ເລກທີໃບອະນຸຍາດດຳເນີນທຸລະກິດ ແລະ ໃບອະນຸຍາດດຳເນີນທຸລະກິດ ທີ່ຍັງບໍ່ທັນໝົດອາຍຸການນຳໃຊ້;
6. ໜັງສື ຫຼື ເອກະສານ ຂໍ້ຜູກມັດໃດໜຶ່ງ ແລະ ລາຍຊື່ ຜູ້ທີ່ມີຕຳແໜ່ງບໍລິຫານ ຂອງນິຕິບຸກຄົນ ແລະ ຜູ້ທີ່ມີການຕົກລົງກັນທາງດ້ານກົດໝາຍ;
7. ສະຖານທີ່ຕັ້ງຂອງທຸລະກິດ ຕາມໃບທະບຽນ ແລະ ສະຖານທີ່ຕັ້ງຂອງທຸລະກິດ;
8. ເລກທີໃບທະບຽນອາກອນ ແລະ ໃບທະບຽນອາກອນ ທີ່ຍັງບໍ່ທັນໝົດອາຍຸການນຳໃຊ້;
9. ໜັງສື ຫຼື ເອກະສານ ທີ່ມີລາຍມື ຫຼື ລາຍເຊັນ ພ້ອມທັງຊື່ ແລະ ຕາປະທັບ ຂອງຜູ້ມອບອຳນາດ ແລະ ຜູ້ທີ່ຖືກມອບໝາຍໃຫ້ມາເຮັດທຸລະກຳ ຫຼື ສ້າງສາຍພົວພັນທຸລະກິດ ແທນ;
10. ຜູ້ທີ່ຖືກມອບໝາຍໃຫ້ມາເຮັດທຸລະກຳ ຫຼື ສ້າງສາຍພົວພັນທຸລະກິດ ແທນນິຕິບຸກຄົນ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 14 ຂອງຂໍ້ຕົກລົງສະບັບນີ້;
11. ຂໍ້ມູນອື່ນ ທີ່ຈຳເປັນ ຫຼື ຕາມການກຳນົດເພີ່ມເຕີມຂອງຜູ້ຄຸ້ມຄອງ.

**ມາດຕາ 17 ການເກັບກຳຂໍ້ມູນ ລູກຄ້າ ທີ່ມີການຕົກລົງກັນທາງດ້ານກົດໝາຍ**

ການເກັບກຳຂໍ້ມູນ ລູກຄ້າ ທີ່ມີການຕົກລົງກັນທາງດ້ານກົດໝາຍ ທີ່ເປັນບຸກຄົນ ຫຼື ນິຕິບຸກຄົນ ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ຕ້ອງດຳເນີນການເກັບກຳຂໍ້ມູນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 15 ແລະ 16 ຂອງຂໍ້ຕົກລົງສະບັບນີ້ແລ້ວ ຍັງຕ້ອງລະບຸຕົວຕົນ, ເກັບກຳຂໍ້ມູນ ແລະ ເອກະສານ ຫຼື ຫຼັກຖານກ່ຽວກັບຜູ້ບໍລິຫານຊັບສິນ (Trustee), ຜູ້ວ່າຈ້າງ (Settlor), ຜູ້ປົກປ້ອງ (Protector) (ຖ້າມີ), ຜູ້ຮັບຜົນປະໂຫຍດ ແລະ ຂໍ້ມູນອື່ນໆທີ່ກ່ຽວຂ້ອງທີ່ເຫັນວ່າຈຳເປັນ ຕາມທີ່ໄດ້ລະບຸໄວ້ໃນໜັງສືສັນຍາ ຫຼື ໜັງສືມອບສິດ.

ນອກຈາກການເກັບກຳຂໍ້ມູນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 15 ແລະ 16 ຂອງຂໍ້ຕົກລົງສະບັບນີ້ແລ້ວ ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ຕ້ອງໄດ້ເກັບໜັງສື ຫຼື ເອກະສານ ກ່ຽວກັບການຕົກລົງກັນທາງດ້ານກົດໝາຍ ແລະ ຂໍ້ມູນອື່ນ ທີ່ຈຳເປັນ ຫຼື ຕາມການກຳນົດເພີ່ມເຕີມ ຂອງຂະແໜງການກະສິກຳ ແລະ ສິ່ງແວດລ້ອມ.

**ມາດຕາ 18 ການຢັ້ງຢືນຕົວຕົນຂອງລູກຄ້າ**

ພາຍຫຼັງສຳເລັດການເກັບກຳຂໍ້ມູນຊອກຮູ້ລູກຄ້າ ຕາມທີ່ກຳນົດໄວ້ໃນມາດຕາ 15, 16 ແລະ 17 ຂອງຂໍ້ຕົກລົງສະບັບນີ້ແລ້ວ ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ຕ້ອງໄດ້ຢັ້ງຢືນຕົວຕົນຂອງລູກຄ້າ ດັ່ງນີ້:

1. ລະບຸຕົວຕົນຂອງລູກຄ້າ ແລະ ກວດສອບ ເພື່ອຢັ້ງຢືນຂໍ້ມູນ ແລະ ເອກະສານ ຫຼື ຫຼັກຖານ ທີ່ລູກຄ້ານຳໃຊ້ເພື່ອຢັ້ງຢືນຕົນ ຈາກແຫຼ່ງຂໍ້ມູນທີ່ສາມາດເຊື່ອຖືໄດ້;

2. ນຳໃຊ້ມາດຕະການທີ່ເໝາະສົມ ໃນການກວດສອບ, ລະບຸຕົວຕົນ ໂດຍການນຳໃຊ້ຂໍ້ມູນ ຂ່າວສານທີ່ໄດ້ຮັບຈາກແຫຼ່ງທີ່ໜ້າເຊື່ອຖື ເພື່ອໃຫ້ຫົວໜ່ວຍທີ່ມີໜ້າທີ່ລາຍງານຮັບຮູ້ລະອຽດ ແລະ ໝັ້ນໃຈວ່າເປັນຜູ້ໄດ້ຮັບຜົນປະໂຫຍດທີ່ແທ້ຈິງຂອງລູກຄ້າ;

3. ນຳໃຊ້ມາດຕະການທີ່ຈຳເປັນ ເພື່ອຂໍຂໍ້ມູນທີ່ເໝາະສົມກ່ຽວກັບຈຸດປະສົງ ແລະ ລັກສະນະຂອງສາຍພົວພັນທຸລະກິດ;

4. ກັ່ນຕອງທຸລະກຳທີ່ລູກຄ້າກຳລັງດຳເນີນ ວ່າສອດຄ່ອງກັບປະຫວັດຂອງລູກຄ້າ, ທຸລະກິດ ແລະ ຄວາມສ່ຽງ ລວມທັງແຫຼ່ງທີ່ມາຂອງທຶນ ເມື່ອເຫັນວ່າຈຳເປັນ;

5. ຮັບປະກັນວ່າເອກະສານ, ຂໍ້ມູນ ຂ່າວສານ ທີ່ໄດ້ຮັບຈາກຂະບວນການເພີ່ມທະວີເອົາໃຈໃສ່ລູກຄ້າມີຄວາມຖືກຕ້ອງ ແລະ ເປັນປັດຈຸບັນ ໂດຍການທົບທວນຄືນຂໍ້ມູນທີ່ບັນທຶກ ໂດຍສະເພາະຂໍ້ມູນຂອງລູກຄ້າທີ່ມີຄວາມສ່ຽງສູງ.

ນອກຈາກ ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ໄດ້ຢັ້ງຢືນຕົວຕົນຂອງລູກຄ້າແລ້ວ ຍັງຈະຕ້ອງກວດສອບຂໍ້ມູນ, ຜູ້ໄດ້ຮັບຜົນປະໂຫຍດທີ່ແທ້ຈິງຂອງລູກຄ້າ ແລະ ຜູ້ທີ່ຖືກມອບໝາຍໃຫ້ມາເຮັດທຸລະກຳແທນວ່າກ່ຽວຂ້ອງກັບລາຍຊື່ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ດັ່ງນີ້:

1. ລາຍຊື່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຖືກກຳນົດຕາມຍັດຕິ ຂອງສະພາຄວາມໝັ້ນຄົງ ອົງການສະຫະປະຊາຊາດ ກ່ຽວກັບການກໍ່ການຮ້າຍ ຫຼື ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ຫຼື ການແຜ່ຜາຍອາວຸດທຳລາຍລ້າງຜານ;

2. ລາຍຊື່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຖືກກຳນົດໃນບັນຊີພາຍໃນຂອງ ສປປ ລາວ ກ່ຽວກັບການກໍ່ການຮ້າຍ ຫຼື ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ຫຼື ການແຜ່ຜາຍອາວຸດທຳລາຍລ້າງຜານ.

## ໝວດທີ 5
## ຂັ້ນຕອນ ແລະ ມາດຕະການ ເອົາໃຈໃສ່ລູກຄ້າຂອງຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ

**ມາດຕາ 19 ຂັ້ນຕອນການດຳເນີນການເອົາໃຈໃສ່ລູກຄ້າຂອງຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ**

ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ຕ້ອງດຳເນີນຂັ້ນຕອນການເອົາໃຈໃສ່ລູກຄ້າ ໃນການປະເມີນ ແລະ ການບໍລິຫານຄວາມສ່ຽງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 7 ແລະ ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້ ເພື່ອໃຫ້ສາມາດຮູ້ ຫຼື ຢັ້ງຢືນໄດ້ວ່າລູກຄ້ານຳໃຊ້ຂໍ້ມູນ ແລະ ເອກະສານ ຫຼື ຫຼັກຖານ ທີ່ຖືກຕ້ອງຕາມກົດໝາຍ ລວມທັງຜູ້ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ ທີ່ກ່ຽວຂ້ອງກັບທຸລະກຳ ຫຼື ການສ້າງສາຍພົວພັນທຸລະກິດ ທີ່ລູກຄ້າກຳລັງດຳເນີນການ ຫຼື ເຄື່ອນໄຫວກັບຕົນຢູ່ນັ້ນ ບໍ່ມີຄວາມກ່ຽວຂ້ອງ, ພົວພັນ, ເຊື່ອມໂຍງກັບການຟອກເງິນ ຫຼື ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ຫຼື ການແຜ່ຜາຍອາວຸດທຳລາຍລ້າງຜານ ຫຼື ການກະທຳຜິດຕົ້ນອື່ນ. ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ຕ້ອງດຳເນີນການເອົາໃຈໃສ່ລູກຄ້າ ລວມທັງລູກຄ້າທີ່ມີຢູ່ແລ້ວ, ລູກຄ້າບາງຄັ້ງຄາວ ແລະ ບຸກຄົນ, ນິຕິບຸກຄົນ ຫຼື ລູກຄ້າທີ່ມີການດຳເນີນການທາງດ້ານກົດໝາຍ ລວມທັງຜູ້ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ ຕາມຂັ້ນຕອນ ດັ່ງນີ້:

1. ລະບຸຕົວຕົນຂອງລູກຄ້າ ແລະ ກວດສອບ ເພື່ອຢັ້ງຢືນຂໍ້ມູນ ແລະ ເອກະສານ ຫຼື ຫຼັກຖານ ທີ່ລູກຄ້ານໍາໃຊ້ເພື່ອຢັ້ງຢືນຕົວຕົນ ຈາກແຫຼ່ງຂໍ້ມູນທີ່ສາມາດເຊື່ອຖືໄດ້;

2. ນໍາໃຊ້ມາດຕະການທີ່ເໝາະສົມ ໃນການກວດສອບ, ລະບຸຕົວຕົນ ໂດຍການນໍາໃຊ້ຂໍ້ມູນ ຂ່າວສານທີ່ໄດ້ຮັບຈາກແຫຼ່ງທີ່ໜ້າເຊື່ອຖື ເພື່ອໃຫ້ຜູ້ດໍາເນີນທຸລະກິດກ່ຽວກັບທີ່ດິນ ຮັບຮູ້ລະອຽດ ແລະ ໝັ້ນໃຈວ່າເປັນຜູ້ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ ຂອງລູກຄ້າ;

3. ນໍາໃຊ້ມາດຕະການທີ່ຈໍາເປັນ ເພື່ອຂໍຂໍ້ມູນທີ່ເໝາະສົມ ກ່ຽວກັບຈຸດປະສົງ ແລະ ລັກສະນະຂອງສາຍພົວພັນທຸລະກິດ;

4. ກັ່ນຕອງທຸລະກໍາທີ່ລູກຄ້າ ກໍາລັງດໍາເນີນວ່າສອດຄ່ອງກັບປະຫວັດຂອງລູກຄ້າ, ທຸລະກິດ ແລະ ຄວາມສ່ຽງ ລວມທັງແຫຼ່ງທີ່ມາຂອງທຶນ ເມື່ອເຫັນວ່າຈໍາເປັນ;

5. ຮັບປະກັນວ່າເອກະສານ, ຂໍ້ມູນ ຂ່າວສານ ທີ່ໄດ້ຮັບຈາກຂະບວນການເພີ່ມທະວີເອົາໃຈໃສ່ລູກຄ້າມີຄວາມຖືກຕ້ອງ ແລະ ເປັນປັດຈຸບັນ ໂດຍການທົບທວນຄືນຂໍ້ມູນທີ່ບັນທຶກ ໂດຍສະເພາະຂໍ້ມູນຂອງລູກຄ້າທີ່ມີຄວາມສ່ຽງສູງ.

ນອກຈາກ ຜູ້ດໍາເນີນທຸລະກິດກ່ຽວກັບທີ່ດິນ ຕ້ອງປະຕິບັດຕາມ ຂໍ້ 1 ຫາ ຂໍ້ 5 ວັກ ໜຶ່ງ ຂອງມາດຕານີ້ແລ້ວ ຜູ້ດໍາເນີນທຸລະກິດກ່ຽວກັບທີ່ດິນ ຍັງຕ້ອງກວດສອບຂໍ້ມູນ, ຜູ້ໄດ້ຮັບຜົນປະໂຫຍດທີ່ແທ້ຈິງຂອງລູກຄ້າ ແລະ ຜູ້ທີ່ຖືກມອບໝາຍໃຫ້ມາເຮັດທຸລະກໍາແທນ ວ່າກ່ຽວຂ້ອງກັບລາຍຊື່ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ດັ່ງນີ້:

1. ລາຍຊື່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຖືກກໍານົດຕາມມະຕິຂອງສະພາຄວາມໝັ້ນຄົງ ອົງການສະຫະປະຊາຊາດ ກ່ຽວກັບການກໍ່ການຮ້າຍ ຫຼື ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ຫຼື ການແຜ່ຜາຍອາວຸດທໍາລາຍລ້າງຜານ;

2. ລາຍຊື່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຖືກກໍານົດໃນບັນຊີພາຍໃນຂອງ ສປປ ລາວ ກ່ຽວກັບການກໍ່ການຮ້າຍ ຫຼື ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ຫຼື ການແຜ່ຜາຍອາວຸດທໍາລາຍລ້າງຜານ.

**ມາດຕາ 20 ການນໍາໃຊ້ມາດຕະການເອົາໃຈໃສ່ລູກຄ້າ ຂອງຜູ້ດໍາເນີນທຸລະກິດກ່ຽວກັບທີ່ດິນ**

ຜູ້ດໍາເນີນທຸລະກິດກ່ຽວກັບທີ່ດິນ ຕ້ອງນໍາໃຊ້ມາດຕະການເອົາໃຈໃສ່ລູກຄ້າ ທີ່ມີຄວາມສ່ຽງກ່ຽວກັບການຟອກເງິນ, ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ແລະ ການແຜ່ຜາຍອາວຸດທໍາລາຍລ້າງຜານ ໃນແຕ່ລະດັບຄວາມສ່ຽງ ຕາມຜົນການຢັ້ງຢືນຕົວຕົນຂອງລູກຄ້າ ຕາມທີ່ກໍານົດໄວ້ໃນມາດຕາ 18 ຂອງຂໍ້ຕົກລົງສະບັບນີ້ ໃຫ້ດໍາເນີນການນໍາໃຊ້ ດັ່ງນີ້:

1. ມາດຕະການແບບລົງເລິກຕໍ່ລູກຄ້າ;
2. ມາດຕະການແບບງ່າຍດາຍຕໍ່ລູກຄ້າ.

**ມາດຕາ 21 ມາດຕະການແບບລົງເລິກ**

ພາຍຫຼັງຜູ້ດໍາເນີນທຸລະກິດກ່ຽວກັບທີ່ດິນ ໄດ້ດໍາເນີນການປະເມີນຄວາມສ່ຽງ ແລະ ການການບໍລິຫານຄວາມສ່ຽງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 7 ແລະ ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້ ຫາກເຫັນວ່າລູກຄ້າ ຂອງຕົນມີຄວາມສ່ຽງສູງໃນດ້ານການຟອກເງິນ ຫຼື ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ຫຼື ການແຜ່ຜາຍອາວຸດທໍາລາຍລ້າງຜານ ຕ້ອງດໍາເນີນມາດຕະການແບບລົງເລິກ ດັ່ງນີ້:

1. ກໍານົດຂັ້ນຕອນເພີ່ມຂຶ້ນ ຫຼື ການຂໍຂໍ້ມູນ ຈາກລູກຄ້າເພີ່ມຂຶ້ນ ເປັນຕົ້ນ ຂໍ້ມູນ ຫຼື ຫຼັກຖານ ໃນການດໍາເນີນ ຫຼື ເຄື່ອນໄຫວທຸລະກິດ, ຂໍ້ມູນແຫຼ່ງທີ່ມາຂອງທຶນ ຫຼື ລາຍໄດ້ ແລະ ຂໍ້ມູນກ່ຽວກັບວັດຖຸປະສົງໃນການດໍາເນີນທຸລະກໍາ ຫຼື ການສ້າງສາຍພົວພັນທຸລະກິດ. ໃນການກໍານົດຂັ້ນຕອນດັ່ງກ່າວ ໃຫ້ພິຈາລະນາອ້າງເຖິງສາຍພົວພັນທາງດ້ານທຸລະກິດ ກັບຜູ້ດໍາເນີນທຸລະກິດກ່ຽວກັບທີ່ດິນ ທີ່ມີຄວາມໜ້າເຊື່ອຖືໃນດ້ານການຕ້ານການຟອກເງິນ, ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ແລະ ການແຜ່ຜາຍອາວຸດທໍາລາຍລ້າງຜານ ເປັນເຫດຜົນໃນການຂໍຂໍ້ມູນເພີ່ມ;

2. ໄດ້ຮັບການອະນຸມັດຈາກຜູ້ອຳນວຍການ, ເຈົ້າຂອງທຸລະກິດ, ຜູ້ຈັດການ ກ່ອນດຳເນີນທຸລະກຳ ຫຼື ການສ້າງສາຍພົວພັນທຸລະກິດກັບລູກຄ້າ ທີ່ມີຄວາມສ່ຽງສູງ ແລະ ອະນຸມັດຜົນການກວດສອບຂໍ້ມູນ ຕາມຂັ້ນຕອນມາດຕະການເພີ່ມທະວີການເອົາໃຈໃສ່ລູກຄ້າ ໃນກໍລະນີທີ່ລູກຄ້າມີຄວາມສ່ຽງສູງ ຊຶ່ງອາດເປັນສາເຫດໃຫ້ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ຕົກເປັນເຄື່ອງມື ແລະ ແຫຼ່ງຂອງການຟອກເງິນ ຫຼື ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ຫຼື ການແຜ່ຜາຍອາວຸດທຳລາຍລ້າງຜານ. ຖ້າລູກຄ້າບໍ່ປະຕິບັດຕາມຂໍ້ກຳນົດການເພີ່ມທະວີການເອົາໃຈໃສ່ລູກຄ້າ ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ຕ້ອງຢຸດຕິການສ້າງສາຍພົວພັນທາງດ້ານທຸລະກຳ ຫຼື ການສ້າງສາຍພົວພັນທຸລະກິດ ກັບລູກຄ້າລາຍດັ່ງກ່າວ ແລະ ລາຍງານເປັນທຸລະກຳ ທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ຫຼື ການແຜ່ຜາຍອາວຸດທຳລາຍລ້າງຜານ ໄປຍັງສຳນັກງານຂໍ້ມູນຕ້ານການຟອກເງິນ;

3. ປະຕິບັດມາດຕະການແບບລົງເລິກຢ່າງຕໍ່ເນື່ອງ ພ້ອມທັງຕິດຕາມທຸລະກຳ ເພື່ອຮັບປະກັນຂັ້ນຕອນການກວດສອບການເຄື່ອນໄຫວທາງດ້ານການເງິນ ຂອງລູກຄ້າທີ່ມີຄວາມສ່ຽງສູງຢ່າງເຂັ້ມງວດ ໂດຍພິຈາລະນາເພີ່ມຄວາມຖີ່, ຂັ້ນຕອນ ຫຼື ການຕິດຕາມ ສ້າງສາຍພົວພັນທຸລະກິດ ແລະ ການເຄື່ອນໄຫວໃນການເຮັດທຸລະກຳ ລວມທັງເພີ່ມຄວາມຖີ່ໃນການກວດສອບຂໍ້ມູນການລະບຸຕົວຕົນ ແລະ ຜູ້ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ ຂອງລູກຄ້າ ຢ່າງເປັນປະຈຳ.

ກໍລະນີຫາກເຫັນວ່າລູກຄ້າທີ່ມີຄວາມສ່ຽງສູງ ແຕ່ມີການເຄື່ອນໄຫວທຸລະກຳ ມີລັກສະນະໂປ່ງໃສ ແລະ ມີຂໍ້ມູນຢັ້ງຢືນແທດເໝາະກັບປະຫວັດລູກຄ້າ ແລະ ເຫັນວ່າລູກຄ້າດັ່ງກ່າວ ບໍ່ໄດ້ມີຄວາມສ່ຽງ ຫຼື ບໍ່ມີສ່ວນພົວພັນ ຫຼື ກ່ຽວຂ້ອງກັບການຟອກເງິນ ຫຼື ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ຫຼື ການແຜ່ຜາຍອາວຸດທຳລາຍລ້າງຜານ ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ຕ້ອງປັບປຸງຄວາມສ່ຽງຂອງລູກຄ້າລາຍດັ່ງກ່າວ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ ໃນແຕ່ລະໄລຍະ.

**ມາດຕາ 22 ມາດຕະການ ແບບງ່າຍດາຍ**

ພາຍຫຼັງຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ໄດ້ດຳເນີນການປະເມີນຄວາມສ່ຽງ ແລະ ການການບໍລິຫານຄວາມສ່ຽງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 7 ແລະ ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້ ຖ້າຫາກເຫັນວ່າລູກຄ້າຂອງຕົນມີຄວາມສ່ຽງຕ່ຳ ໃນດ້ານການຟອກເງິນ ຫຼື ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ຫຼື ການແຜ່ຜາຍອາວຸດທຳລາຍລ້າງຜານ ໃຫ້ພິຈາລະນາຫຼຸດລະດັບຄວາມເຂັ້ມງວດ ໃນການກວດສອບຂໍ້ມູນ ແລະ ນຳໃຊ້ມາດຕະການແບບງ່າຍດາຍ ດັ່ງນີ້:

1. ຕ້ອງໄດ້ຢັ້ງຢືນການລະບຸຕົວຕົນຂອງລູກຄ້າ ແລະ ຜູ້ຮັບຜົນປະໂຫຍດທີ່ແທ້ຈິງ ໃຫ້ໄວທີ່ສຸດເທົ່າທີ່ເຮັດໄດ້ ພາຍຫຼັງການສ້າງສາຍພົວພັນທາງທຸລະກິດ;

2. ຖ້າລູກຄ້າບໍ່ມີບັດປະຈຳຕົວ ຫຼື ໜັງສືຜ່ານແດນ ໃຫ້ນຳໃຊ້ສຳມະໂນຄົວ ຫຼື ໃບຢັ້ງຢືນທີ່ຢູ່ ຫຼື ເອກະສານອື່ນ ເພື່ອຢັ້ງຢືນຕົວຕົນ. ຍົກເວັ້ນກໍລະນີທີ່ມີຂໍ້ສົງໄສກ່ຽວກັບການຟອກເງິນ ຫຼື ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ຫຼື ການແຜ່ຜາຍອາວຸດທຳລາຍລ້າງຜານ ຕ້ອງມີເອກະສານຢັ້ງຢືນຕົວຕົນທັງໝົດ;

3. ຫຼຸດລະດັບຄວາມຖີ່ ໃນການຂໍຂໍ້ມູນການຢັ້ງຢືນຕົວຕົນຂອງລູກຄ້າ ໃຫ້ເປັນປັດຈຸບັນ;

4. ຫຼຸດລະດັບຄວາມເຂັ້ມງວດ ໃນການຕິດຕາມຢ່າງຕໍ່ເນື່ອງໃນການເຄື່ອນໄຫວທຸລະກຳ ຂອງລູກຄ້າບົນພື້ນຖານເພດານ ການເຮັດທຸລະກຳຂອງລູກຄ້າ;

5. ຫາກສະຫຼຸບໄດ້ຈຸດປະສົງ ແລະ ລັກສະນະປະເພດການສ້າງສາຍພົວພັນທາງທຸລະກິດ ແລະ ທຸລະກຳຂອງລູກຄ້າ ກໍ່ບໍ່ຈຳເປັນຕ້ອງເກັບກຳຂໍ້ມູນເພີ່ມເຕີ່ມ ຫຼື ນຳໃຊ້ມາດຕະການລົງເລິກຕໍ່ລູກຄ້າຕື່ມອີກ.

ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ສາມາດນຳໃຊ້ມາດຕະການງ່າຍດາຍ ກໍລະນີລູກຄ້າທີ່ມີຄວາມສ່ຽງຕ່ຳອາດຈະດຳເນີນການຊັກຊ້ຳກໍໄດ້ ແຕ່ຕ້ອງຂັດເລືອກຄວາມສ່ຽງຂອງລູກຄ້າໃຫ້ເໝາະສົມ ຕ້ອງຄຳນຶງເຖິງເງື່ອນໄຂທີ່ລູກຄ້າ ອາດໃຊ້ປະໂຫຍດຈາກການເປັນລູກຄ້າເກົ່າມາກ່ອນ ເພື່ອຢັ້ງຢືນຄວາມສ່ຽງຄືນ. ການປະເມີນຄວາມສ່ຽງ ຕ້ອງໂຈະການຊື້ ຂາຍ ສິດນຳໃຊ້ທີ່ດິນ ພາຍໃນໄລຍະເວລາໃດໜຶ່ງ. ກໍລະນີລູກຄ້າທີ່ມີຄວາມສ່ຽງ ႕

ຕ່ຳ ແລະ ໄດ້ຮັບການຢັ້ງຢືນຕົວຕົນ ຢ່າງຖືກຕ້ອງແລ້ວຄວນຫຼຸດຜ່ອນລະດັບຄວາມເຂັ້ມງວດ ໃນການຕິດຕາມຕໍ່ລູກຄ້ານັ້ນ.

ກໍລະນີເຫັນວ່າລູກຄ້າທີ່ມີຄວາມສ່ຽງຕ່ຳ ແຕ່ມີການເຄື່ອນໄຫວທຸລະກຳ ຫຼື ການເຄື່ອນໄຫວໃນລັກສະນະໃດໜຶ່ງ ຫຼື ມີສ່ວນພົວພັນ ຫຼື ກ່ຽວຂ້ອງກັບການຟອກເງິນ ຫຼື ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ຫຼື ການແຜ່ຜາຍອາວຸດທຳລາຍລ້າງຜານ ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ຕ້ອງປັບປຸງຄວາມສ່ຽງຂອງລູກຄ້າດັ່ງກ່າວ ໃຫ້ເປັນລູກຄ້າທີ່ມີຄວາມສ່ຽງສູງ ແລະ ດຳເນີນມາດຕະການແບບລົງເລິກທັນທີ ພ້ອມທັງນຳສົ່ງບົດລາຍງານທຸລະກຳ ທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ຫຼື ການແຜ່ຜາຍອາວຸດທຳລາຍລ້າງຜານ ມາຍັງສຳນັກງານຂໍ້ມູນຕ້ານການຟອກເງິນ.

**ມາດຕາ 23 ການນຳໃຊ້ມາດຕະການເພີ່ມເຕີມ ເອົາໃຈໃສ່ລູກຄ້າ ຂອງຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ**

ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ນອກຈາກນຳໃຊ້ມາດຕະການເອົາໃຈໃສ່ລູກຄ້າ ແບບງ່າຍດາຍ ແລະ ລົງເລິກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 21 ແລະ ມາດຕາ 22 ຂອງຂໍ້ຕົກລົງສະບັບນີ້ແລ້ວ ຍັງຕ້ອງນຳໃຊ້ມາດຕະການເພີ່ມເຕີມ ຕາມແຕ່ລະກໍລະນີ ດັ່ງນີ້:

1. ມາດຕະການສຳລັບບຸກຄົນ ທີ່ຖືກມອບໝາຍໃຫ້ມາເຮັດທຸລະກຳແທນລູກຄ້າ;
2. ມາດຕະການສຳລັບລູກຄ້າ ທີ່ມີສະຖານະພາບທາງການເມືອງ;
3. ມາດຕະການສຳລັບລູກຄ້າ ທີ່ເປັນນິຕິບຸກຄົນ ແລະ ຜູ້ທີ່ມີການຕົກລົງກັນທາງດ້ານກົດໝາຍ;
4. ມາດຕະການສຳລັບລູກຄ້າ ຜູ້ທີ່ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ ຂອງນິຕິບຸກຄົນ;
5. ມາດຕະການສຳລັບລູກຄ້າ ຜູ້ທີ່ຮັບຜົນປະໂຫຍດທີ່ແທ້ຈິງ ຂອງຜູ້ທີ່ມີການຕົກລົງກັນທາງດ້ານກົດໝາຍ;
6. ມາດຕະການເອົາໃຈໃສ່ລູກຄ້າ ສຳລັບປະເທດທີ່ມີຄວາມສ່ຽງ;
7. ມາດຕະການຕໍ່ກັບກໍລະນີການດຳເນີນມາດຕະການເພີ່ມທະວີການເອົາໃຈໃສ່ລູກຄ້າ ບໍ່ສຳເລັດ;
8. ມາດຕະການ ການປະຕິບັດຕາມຫຼັກການກັກ, ການຍຶດ ຫຼື ການອາຍັດທຶນ.

**ມາດຕາ 24 ມາດຕະການ ສຳລັບບຸກຄົນ ທີ່ຖືກມອບໝາຍໃຫ້ມາເຮັດທຸລະກຳແທນ**

ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ຕ້ອງດຳເນີນມາດຕະການເອົາໃຈໃສ່ລູກຄ້າ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 19 ຂອງຂໍ້ຕົກລົງສະບັບນີ້ ກັບບຸກຄົນທີ່ຖືກມອບໝາຍໃຫ້ມາເຮັດທຸລະກຳແທນ ຕ້ອງມີການຢັ້ງຢືນເປັນລາຍລັກອັກສອນຈາກລູກຄ້າ ຊຶ່ງບຸກຄົນທີ່ໄດ້ຮັບມອບໝາຍໃຫ້ມາເຮັດທຸລະກຳແທນ ຕ້ອງໄດ້ລະບຸ ແລະ ກວດສອບຂໍ້ມູນ ເພື່ອຢັ້ງຢືນຕົວຕົນຂອງຜູ້ກ່ຽວ.

**ມາດຕາ 25 ມາດຕະການ ສຳລັບບຸກຄົນ ທີ່ມີສະຖານະພາບທາງການເມືອງ**

ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ຫາກມີລູກຄ້າເປັນບຸກຄົນ ທີ່ມີສະຖານະພາບທາງການເມືອງ ເປັນຕົ້ນ ນັກການເມືອງຕ່າງປະເທດ, ພະນັກງານຂອງລັດ, ພະນັກງານອົງການຈັດຕັ້ງສາກົນ, ສະມາຊິກໃນຄອບຄົວ ແລະ ບຸກຄົນທີ່ມີສາຍພົວພັນໃກ້ຊິດຂອງບຸກຄົນ ທີ່ມີສະຖານະພາບທາງການເມືອງ ນອກຈາກປະຕິບັດຕາມທີ່ໄດ້ກຳນົດໄວ້ໃນວັກ ສອງ ມາດຕາ 22 ຂອງກົດໝາຍວ່າດ້ວຍການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຍັງຕ້ອງປະຕິບັດ ດັ່ງນີ້:

1. ກຳນົດໃຫ້ເປັນລູກຄ້າທີ່ມີຄວາມສ່ຽງສູງ ພ້ອມທັງນຳໃຊ້ມາດຕະການແບບລົງເລິກ ແລະ ນຳໃຊ້ມາດຕະການທີ່ເໝາະສົມ ເພື່ອຊອກຮູ້ແຫຼ່ງທຶນ ແລະ ລາຍຮັບຂອງລູກຄ້າ ແລະ ໄດ້ຮັບການອະນຸມັດຈາກ ຄະນະອຳນວຍການ ຫຼື ຄະນະຜູ້ບໍລິຫານຂອງຕົນ ກ່ອນມີການສ້າງສາຍພົວພັນ;

2. ຕ້ອງລະບຸໃຫ້ໄດ້ວ່າ ລູກຄ້າທີ່ເປັນບຸກຄົນ ທີ່ມີສະຖານະພາບທາງການເມືອງ ປະເພດໃດ;

3. ພິຈາລະນາ ລາຍງານເປັນທຸລະກຳທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ຫຼື ການແຜ່ຜາຍອາວຸດທຳລາຍລ້າງຜານ ໄປຍັງສຳນັກງານຂໍ້ມູນຕ້ານການຟອກເງິນ ທັນທີ;

4. ນຳໃຊ້ມາດຕະການ ຕິດຕາມຢ່າງຕໍ່ເນື່ອງ ຕໍ່ລູກຄ້າລາຍດັ່ງກ່າວ. ៥

**ມາດຕາ 26 ມາດຕະການ ສໍາລັບນິຕິບຸກຄົນ ແລະ ຜູ້ທີ່ມີການຕົກລົງກັນທາງດ້ານກົດໝາຍ**

ຜູ້ດໍາເນີນທຸລະກິດກ່ຽວກັບທີ່ດິນ ນອກຈາກຕ້ອງນໍາໃຊ້ມາດຕະການເອົາໃຈໃສ່ລູກຄ້າ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 19 ຂອງຂໍ້ຕົກລົງສະບັບນີ້ ຕ້ອງນໍາໃຊ້ມາດຕະການທີ່ເຫັນວ່າຈໍາເປັນ ສໍາລັບລູກຄ້າທີ່ເປັນນິຕິບຸກຄົນ ແລະ ຜູ້ທີ່ມີການຕົກລົງກັນທາງດ້ານກົດໝາຍ ດັ່ງນີ້:

1. ລະບຸໄດ້ເຖິງຄຸນລັກສະນະ ແລະ ຮູບແບບ ທຸລະກິດຂອງລູກຄ້າ, ການເປັນເຈົ້າຂອງ, ໂຄງສ້າງຜູ້ມີສິດຄວບຄຸມພາຍໃນຂອງທຸລະກິດ;

2. ຢັ້ງຢືນ ແລະ ລະບຸຕົວຕົນຂອງລູກຄ້າ ໂດຍການພິຈາລະນາຂໍ້ມູນ ດັ່ງນີ້:

2.1 ຊື່ຂອງທຸລະກິດ ໂດຍມີເອກະສານ ແລະ ຫຼັກຖານຢັ້ງຢືນການເປັນນິຕິບຸກຄົນ ທີ່ຖືກຕ້ອງຕາມລະບຽບກົດໝາຍ;

2.2 ເອກະສານທີ່ລະບຸກ່ຽວກັບຜູ້ມີສິດໃນການຄວບຄຸມ ແລະ ສັນຍາຜູກມັດຕ່າງໆ ລວມທັງຊື່ບຸກຄົນທີ່ກ່ຽວຂ້ອງ ທີ່ມີຕໍາແໜ່ງຂັ້ນຜູ້ບໍລິຫານອາວຸໂສ ຂອງນິຕິບຸກຄົນ ຫຼື ຜູ້ທີ່ມີການຕົກລົງກັນທາງດ້ານກົດໝາຍ;

2.3 ສະຖານທີ່ຕັ້ງ ທີ່ໄດ້ລະບຸໄວ້ໃນໃບທະບຽນວິສາຫະກິດ ແລະ ສະຖານທີ່ຕັ້ງຕົວຈິງຂອງທຸລະກິດ.

**ມາດຕາ 27 ມາດຕະການ ສໍາລັບຜູ້ທີ່ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ ຂອງນິຕິບຸກຄົນ**

ຜູ້ດໍາເນີນທຸລະກິດກ່ຽວກັບທີ່ດິນ ຕ້ອງຢັ້ງຢືນ ແລະ ນໍາໃຊ້ມາດຕະການທີ່ເໝາະສົມ ເພື່ອລະບຸການຢັ້ງຢືນຕົວຕົນຜູ້ຮັບຜົນປະໂຫຍດທີ່ແທ້ຈິງ ຂອງລູກຄ້າ ທີ່ເປັນນິຕິບຸກຄົນ ໂດຍການພິຈາລະນາຈາກຂໍ້ມູນ ດັ່ງນີ້:

1. ຢັ້ງຢືນຂໍ້ມູນຂອງບຸກຄົນ ຜູ້ທີ່ມີສິດຄວບຄຸມຜົນປະໂຫຍດສຸດທ້າຍທີ່ແທ້ຈິງ ຫຼື ຜູ້ຮັບຜົນປະໂຫຍດ 20% ຂຶ້ນໄປ ຂອງນິຕິບຸກຄົນ;

2. ກໍລະນີມີຂໍ້ສົງໄສຕໍ່ກັບຂໍ້ມູນທີ່ໄດ້ຈາກຂໍ້ທີ 1 ເປັນຕົ້ນ ຜູ້ທີ່ມີສິດຄວບຄຸມນິຕິບຸກຄົນດັ່ງກ່າວ ເປັນຜູ້ຮັບຜົນປະໂຫຍດທີ່ແທ້ຈິງເອງ ຫຼື ນິຕິບຸກຄົນນັ້ນ ບໍ່ມີເອກະສານການມອບສິດໃຫ້ບຸກຄົນອື່ນ ຄວບຄຸມກິດຈະການ ຫຼື ດໍາເນີນກິດຈະການຂອງນິຕິບຸກຄົນດັ່ງກ່າວ ຫົວໜ່ວຍທີ່ມີໜ້າທີ່ລາຍງານຕ້ອງໄດ້ດໍາເນີນວິທີການ ຫຼື ກົນໄກອື່ນ ເພື່ອໃຫ້ສາມາດລະບຸຜູ້ຮັບຜົນປະໂຫຍດທີ່ແທ້ຈິງໄດ້;

3. ກໍລະນີບໍ່ມີຂໍ້ມູນຂອງບຸກຄົນ ຕາມທີ່ໄດ້ກໍານົດໃນຂໍ້ທີ 1 ແລະ 2 ຕ້ອງມີການຢັ້ງຢືນບຸກຄົນອື່ນທີ່ກ່ຽວຂ້ອງ ທີ່ມີຕໍາແໜ່ງຜູ້ບໍລິຫານອາວຸໂສ.

**ມາດຕາ 28 ມາດຕະການ ສໍາລັບ ຜູ້ທີ່ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ ຂອງຜູ້ທີ່ມີການຕົກລົງກັນທາງດ້ານກົດໝາຍ**

ຜູ້ດໍາເນີນທຸລະກິດກ່ຽວກັບທີ່ດິນ ຕ້ອງໄດ້ລະບຸ ແລະ ນໍາໃຊ້ມາດຕະການເອົາໃຈໃສ່ລູກຄ້າທີ່ເໝາະສົມເພື່ອຢັ້ງຢືນຕົວຕົນຜູ້ທີ່ກ່ຽວຂ້ອງ ຂອງຜູ້ທີ່ມີການຕົກລົງກັນທາງດ້ານກົດໝາຍ ຕ້ອງປະຕິບັດ ດັ່ງນີ້:

1. ສໍາລັບບໍລິສັດ ບໍລິຫານຊັບສິນ (Trust Service Provider) ຫຼື ຜູ້ບໍລິຫານຊັບສິນ (Trustee) ທີ່ໄດ້ຮັບອະນຸຍາດ ຢ່າງຖືກຕ້ອງຕາມກົດໝາຍ ຂອງ ສປປ ລາວ ເພື່ອເຮັດໜ້າທີ່ການບໍລິຫານຊັບສິນ ໃຫ້ບຸກຄົນ ຫຼື ນິຕິບຸກຄົນ ຫຼື ຜູ້ດໍາເນີນທຸລະກິດກ່ຽວກັບທີ່ດິນ ຕ້ອງປະຕິບັດຕາມທີ່ໄດ້ກໍານົດໄວ້ໃນມາດຕາ 26 ຂອງຂໍ້ຕົກລົງສະບັບນີ້ ເພື່ອຢັ້ງຢືນຕົວຕົນ ຜູ້ທີ່ມີສິດໃນການຄວບຄຸມ ຫຼື ທີ່ຮັບຜົນປະໂຫຍດທີ່ແທ້ຈິງ;

2. ສໍາລັບຜູ້ທີ່ມີການຕົກລົງກັນທາງດ້ານກົດໝາຍ ໃນຮູບແບບອື່ນ, ຜູ້ດໍາເນີນທຸລະກິດກ່ຽວກັບທີ່ດິນຕ້ອງກໍານົດໃຫ້ລູກຄ້າມີການຢັ້ງຢືນຕົນ ຕາມການກໍານົດໄວ້ໃນມາດຕາ 26 ຂອງຂໍ້ຕົກລົງສະບັບນີ້.

ກໍລະນີ ບໍລິສັດບໍລິຫານຊັບສິນ (Trust Service Provider) ຫຼື ຜູ້ບໍລິຫານຊັບສິນ (Trustee) ທີ່ໄດ້ມອບໝາຍໃຫ້ບໍລິຫານຊັບສິນ ຕ້ອງເປີດເຜີຍຮູບແບບ ຫຼື ສະຖານະການດໍາເນີນທຸລະກິດຂອງຕົນ ຕໍ່ຜູ້ດໍາເນີນທຸລະກິດກ່ຽວກັບທີ່ດິນ ເມື່ອມີການສ້າງສາຍພົວພັນທາງດ້ານທຸລະກິດ ຫຼື ການດໍາເນີນທຸລະກໍາ ເກີນເພດານທີ່ກໍານົດໄວ້. ໃນກໍລະນີບໍ່ປະຕິບັດ ຫຼື ບໍ່ເປີດເຜີຍຮູບແບບ ຫຼື ສະຖານະການດໍາເນີນທຸລະກິດຂອງຕົນ ຈະຖືກດໍາເນີນມາດຕະການສຶກສາອົບຮົມ, ກ່າວເຕືອນ ຫຼື ລົງໂທດ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 29 ມາດຕະການເອົາໃຈໃສ່ລູກຄ້າ ກໍລະນີບໍ່ສຳເລັດ**

ໃນກໍລະນີຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ຫາກບໍ່ສາມາດປະຕິບັດມາດຕະການເອົາໃຈໃສ່ລູກຄ້າຂອງຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 19 ຂອງຂໍ້ຕົກລົງສະບັບນີ້ ຕໍ່ກັບລູກຄ້າໃໝ່ ຫຼື ລູກຄ້າທີ່ມີຢູ່ແລ້ວ, ຜູ້ຮັບຜົນປະໂຫຍດທີ່ແທ້ຈິງ ແລະ ຜູ້ທີ່ຖືກມອບໝາຍມາເຮັດທຸລະກຳແທນ ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ຕ້ອງປະຕິບັດ ດັ່ງນີ້:

1. ບໍ່ໃຫ້ມີການ ຊື້ ຂາຍສິດນຳໃຊ້ທີ່ດິນ, ບໍ່ໃຫ້ສ້າງສາຍພົວພັນທຸລະກິດ ຫຼື ບໍ່ໃຫ້ດຳເນີນທຸລະກຳ ໃດໜຶ່ງກ່ຽວກັບທີ່ດິນ ພ້ອມທັງຢຸດຕິການສ້າງສາຍພົວພັນທຸລະກິດ;

2. ໃຫ້ຖືວ່າເປັນທຸລະກຳທີ່ສົງໄສວ່າເປັນການຟອກເງິນ, ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ແລະ ການລ້າງຜານອາວຸດທຳລາຍລ້າງຜານ.

**ມາດຕາ 30 ການກວດກາຂໍ້ມູນຂອງລູກຄ້າ**

ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ຕ້ອງກວດກາຂໍ້ມູນ ຂອງລູກຄ້າຢ່າງເປັນປົກກະຕິ ແລະ ທັນສະພາບການ ເພື່ອຮັບປະກັນຄວາມໂປ່ງໃສຂອງລູກຄ້າ ບໍ່ໃຫ້ພົວພັນກັບການຟອກເງິນ, ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ການລ້າງຜານອາວຸດທຳລາຍລ້າງຜານ ໂດຍສະເພາະການກວດກາ ກ່ຽວກັບບັນຊີຂ້ວາມບາດຂອງອົງການຈັດຕັ້ງສາກົນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕາມເວັບໄຊສ໌ ດັ່ງນີ້:

1. https://www.un.org/securitycouncil/sanctions/1267/aq_sanctions_list/summaries;
2. https://www.un.org/securitycouncil/sanctions/1988;
3. https://www.un.org/securitycouncil/sanctions/1988/materials/summaries;
4. https://www.un.org/securitycouncil/sanctions/1718/materials;
5. https://www.un.org/securitycouncil/content/2231/background;
6. http://amlio.gov.la/eng/index.php.

ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ຕ້ອງທົບທວນລູກຄ້າຂອງຕົນຢ່າງເປັນປົກກະຕິ, ກໍລະນີຫາກກວດພົບ ຫຼື ພົບເຫັນວ່າລູກຄ້າ, ຜູ້ຮັບຜົນປະໂຫຍດທີ່ແທ້ຈິງ ຫຼື ຜູ້ທີ່ຖືກມອບໝາຍມາເຮັດທຸລະກຳແທນ ຕົງກັບບັນຊີຂ້ວາມບາດຂ້າງເທິງ ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ຕ້ອງປະຕິເສດ ຫຼື ຢຸດຕິສາຍພົວພັນທາງທຸລະກິດ ຫຼື ຢຸດຕິທຸລະກຳ ກ່ຽວກັບທີ່ດິນທັນທີ ແລ້ວລາຍງານດ່ວນໄປຍັງເຈົ້າໜ້າທີ່ປ້ອງກັນຄວາມສະຫງົບ ແລະ ສຳນັກງານຂໍ້ມູນຕ້ານການຟອກເງິນ ເພື່ອພິຈາລະນາ ຍຶດ ຫຼື ອາຍັດ ຊັບສິນຂອງລູກຄ້າດັ່ງກ່າວ.

ກໍລະນີ ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ກວດພົບເຫັນລາຍຊື່ຕາມທີ່ກຳນົດໃນເວັບໄຊສ໌ຂ້າງເທິງ ຕ້ອງໄດ້ກັກ ຫຼື ລະງັບ ເງິນທີ່ມາຊື້ສິດນຳໃຊ້ທີ່ດິນ ນັ້ນ, ແຕ່ຫາກກໍລະນີໄດ້ຮັບແຈ້ງຈາກກະຊວງປ້ອງກັນຄວາມສະຫງົບ ຫຼື ສຳນັກງານຂໍ້ມູນຕ້ານການຟອກເງິນ ວ່າລາຍຊື່ດັ່ງກ່າວ ບໍ່ໄດ້ຖືກກຳນົດໃນບັນຊີຂ້ວາມບາດຂອງອົງການຈັດຕັ້ງສາກົນ, ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ຕ້ອງຍົກເລີກການກັກ ຫຼື ຍົກເລີກ ການລະງັບເງິນ ທີ່ມາຊື້ ຂາຍສິດນຳໃຊ້ທີ່ດິນນັ້ນ ຕາມການອະນຸຍາດຂອງກະຊວງປ້ອງກັນຄວາມສະຫງົບ ຫຼື ສຳນັກງານຂໍ້ມູນຕ້ານການຟອກເງິນ.

ກໍລະນີກະຊວງປ້ອງກັນຄວາມສະຫງົບ ຫຼື ສຳນັກງານຂໍ້ມູນຕ້ານການຟອກເງິນ ໄດ້ແຈ້ງກ່ຽວກັບການເອົາລາຍຊື່ອອກຈາກບັນຊີຂ້ວາມບາດຂອງອົງການຈັດຕັ້ງສາກົນ, ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ຕ້ອງຍົກເລີກການອາຍັດທຶນ ຫຼື ຊັບສິນ ທີ່ໄດ້ຖືກອາຍັດໄວ້ ແລະ ສືບຕໍ່ໃຫ້ບໍລິການປົກກະຕິ.

## ໝວດທີ 5
## ການເກັບຮັກສາຂໍ້ມູນ, ການຫ້າມເຮັດໃຫ້ລູກຄ້າຮູ້ໂຕ ແລະ ການປົກປ້ອງ

**ມາດຕາ 31 ການເກັບຮັກສາຂໍ້ມູນ**

ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ຕ້ອງບັນທຶກ ແລະ ເກັບຮັກສາຂໍ້ມູນທັງໝົດ ຂອງລູກຄ້າ ຕາມປະເພດເອກະສານ ແລະ ກອບເວລາ ຢ່າງໜ້ອຍ 10 ປີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 25 ຂອງກົດໝາຍວ່າດ້ວຍ ການຕ້ານ ການຟອກເງິນ ແລະ ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 64/ສພຊ, ລົງວັນທີ 01 ກໍລະກົດ 2024, ພ້ອມທັງຮັບປະກັນຂໍ້ມູນດັ່ງກ່າວ ໃຫ້ເປັນປັດຈຸບັນ ແລະ ສາມາດສະໜອງໃຫ້ແກ່ສຳນັກງານຂໍ້ມູນຕ້ານການຟອກເງິນ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຕາມການຮ້ອງຂໍ ຢ່າງທັນສະພາບການ.

**ມາດຕາ 32 ການຮັກສາຄວາມລັບ**

ພະນັກງານທີ່ກ່ຽວຂ້ອງ, ຜູ້ຈັດການ, ຜູ້ບໍລິຫານ, ຜູ້ອຳນວຍການ, ຄະນະອຳນວຍການ, ສະພາບໍລິຫານພາຍໃນທຸລະກິດກ່ຽວກັບທີ່ດິນ ລວມທັງຜູ້ທີ່ກ່ຽວຂ້ອງ ຕ້ອງຮັກສາຄວາມລັບຂອງລູກຄ້າ ກ່ຽວກັບວຽກງານຕ້ານການຟອກເງິນ, ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ແລະ ການແຜ່ຜາຍອາວຸດທຳລາຍລ້າງຜານ, ຫ້າມເປີດເຜີຍຂໍ້ມູນ ຫຼື ມີພຶດຕິກຳ ຫຼື ການກະທຳໃດໜຶ່ງ ຫຼື ດ້ວຍວິທີການໃດໜຶ່ງ ທີ່ຈະເຮັດໃຫ້ລູກຄ້າຮູ້ຕົວ ກ່ຽວກັບການນຳໃຊ້ມາດຕະການເອົາໃຈໃສ່ລູກຄ້າ ຫຼື ມີການລາຍງານທຸລະກຳ ທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ແລະ ການແຜ່ຜາຍອາວຸດທຳລາຍລ້າງຜານ ຫຼື ລາຍງານຂໍ້ມູນໃດໜຶ່ງກ່ຽວກັບລູກຄ້າ ໄປຍັງສຳນັກງານຂໍ້ມູນຕ້ານການຟອກເງິນ.

**ມາດຕາ 33 ການປົກປ້ອງ**

ພະນັກງານ ແລະ ເຈົ້າໜ້າທີ່ ທີ່ເຮັດວຽກງານຕ້ານ ການຟອກເງິນ, ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ແລະ ການແຜ່ຜາຍອາວຸດທຳລາຍລ້າງຜານ ພ້ອມທັງຜູ້ເຂົ້າຮ່ວມໃນວຽກງານດັ່ງກ່າວ ເປັນຕົ້ນ ຄະນະອຳນວຍການ, ຜູ້ຈັດການ, ຜູ້ລາຍງານ, ຜູ້ສະໜອງຂໍ້ມູນ ຂ່າວສານ, ພະຍານ, ຜູ້ຊ່ຽວຊານ ລວມທັງຄອບ ຄົວຂອງພວກກ່ຽວ ຈະໄດ້ຮັບການປົກປ້ອງຕາມກົດໝາຍ ຈາກການຮ້ອງຟ້ອງທາງແພ່ງ ແລະ ອາຍາ, ຈາກການແກ້ແຄ້ນ, ຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ, ອິດສະລະພາບ ແລະ ການສ້າງຄວາມເສຍຫາຍຕໍ່ກຽດສັກສີ, ຊື່ສຽງ ຫຼື ຊັບສິນສ່ວນຕົວ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 34 ການຈັດຕັ້ງປະຕິບັດ**

ມອບໃຫ້ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ເປັນຜູ້ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ມອບໃຫ້ ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ, ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ແລະ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຕິດຕາມ ກວດກາ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 35 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ລັດຖະມົນຕີ**

ປອ. ໄຊມະຄອນ ອິນທະວົງ